## <u>ຄະນະຜູ້ຈັດທຳ ຄຳແນະນຳສຳລັບຄຣູສອນ</u>

**Copyright © 2014 by BAPTISTWAY PRESS®.**
**ສງວນລິກຂະສິດ**

ອະນຸຍາດໃຫ້ຄຣິສຕະຈັກເຮັດກ໊ອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບລາຍລະອຽດເພີ້ມເຕີມກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas,
333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office.

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ໄດ້ຄັດມາຈາກປຶ້ມພຣະຄັມພີທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິກຂະສິດຂອງປຶ້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ: ເດືອນ ມີນາ 2004

BAPTISTWAY Management Team

Executive Director, Baptist General Convention of Texas: David Hardage
Director, Church Ministry Resources: Chris Liebrum
Director, Bible Study/Discipleship: Phil Miller

Publisher BAPTISTWAY PRESS®: Scott Stevens

Language Materials Team

Teaching Procedures Writer for Lesson 1, 2, 3
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lessons 1, 2, 3,
Phaisane Somsith, Homprakhoon Baptist Church, Dallas, Texas

Teaching Procedures Writer for Lesson 4, 5, 6, 7
Bounchanh Vongsurith, Lao Congregation of First Baptist Church, Amarillo, TX
Editor for Lessons 4, 5, 6, 7
Phaisane Somsith, Homprakhoon Baptist Church, Dallas, Texas

Teaching Procedures Writer for Lesson 8, 9, 10
Sidney Kahn, Saginaw Community Church, Fort Worth, Texas
Editor for Lessons 8, 9, 10
Phaisane Somsith, Homprakhoon Baptist Church, Dallas, Texas

Teaching Procedures Writer for Lesson 11, 12, 13 and Christmas
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lessons 11, 12, 13 and Christmas
Phaisane Somsith, Homprakhoon Baptist Church, Dallas, Texas

Facilitator for the LAOTIAN TEAM: Joe Haag

Patty Lane, Director, Office of Intercultural Initiatives, Baptist General Convention of Texas

# ຄຳແນະນຳສຳລັບຄຣູສອນ

# ບົດຮຽນທີ 1

# <u>ການຝຶກຝົນຝ່າຍພຣະວິນຍານ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້</u>**: ມາຣະໂກ 1:21-39

**<u>ພູມຫລັງຂອງພຣະຄັມພີ</u>**: ມາຣະໂກ 1:1-39

**<u>ຈຸດສຳຄັນສຳລັບບົດຮຽນນີ້:</u>** ພຣະເຢຊູຊົງເຄື່ອນໄຫວໄປມາໂດຍຣິດອຳນາດຂອງພຣະວິນຍານບໍຣິສຸດ, ບໍ່ວ່າຈະເປັນການສິດສອນ ການປິ່ນປົວພະຍາດ ແລະການຂັບໄລ່ຜີຕ່າງໆ

**<u>ຄຳຖາມເພື່ອການຄົ້ນຄວ້າ</u>**: ພວກເຮົາຈະຈົດຈຳເອົາຢ່າງໃດ ແລະຈະມີຄວາມຮັບຜິດຊອບຢ່າງໃດຕໍ່ພຣະວິນຍານບໍຣິສຸດໃນຊີວິດຂອງພວກເຮົາ

**<u>ຈຸດປະສົງຂອງບົດຮຽນນີ້</u>**: ເພື່ອຈະຈົດຈຳແລະມີຄວາມຮັບຜິດຊອບຕໍ່ພຣະວິນຍານບໍຣິສຸດ, ຕົວຂອງຂ້ອຍເອງຈະເຮັດຢ່າງໃດຕໍ່ຊີວິດ

## <u>ແຜນການສິດສອນສຳລັບຄຣູ</u>

## <u>ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ</u>

1. ຄຣູຈະອະລັມພະບົດຈັກໜ້ອຍນຶ່ງ, ວ່າວັນນີ້ພວກເຮົາຈະໄດ້ຮຽນດ້ວຍກັນໃນຂ່າວປະເສີດມາຣະໂກ. ຂ່າວປະເສີດມາຣະໂກ ແມ່ນຂຽນຂຶ້ນເພື່ອຈະດຶງດູດເອົາຜູ້ຄົນທັງຫລາຍໃຫ້ເຂົ້າມາຫາພຣະເຢຊູ ແລະເພື່ອຈະໃຫ້ຜູ້ຄົນທັງຫລາຍຮັບຮູ້ວ່າພຣະອົງຊົງເປັນພຣະເມຊີອາ. ໃນປຶ້ມນີ້ ສ່ວນຫລາຍແລ້ວແມ່ນກິຈກັມການກະທຳການອັສຈັນແລະການປ່າວປະກາດ. ຂະນະທີ່ພວກເຮົາກຳລັງເລີ້ມຕົ້ນ, ມີສິ່ງໃດບໍ່ທີ່ທ່ານຮູ້ຈັກມາກ່ອນແລ້ວກ່ຽວກັບປຶ້ມຂ່າວປະເສີດສະບັບນີ້?
    - ຜູ້ບັນທຶກຂ່າວປະເສີດນີ້ຊື່ວ່າ John Mark ຊື່ນີ້ບໍ່ມີໃນລາຍຊື່ທີ່ເປັນສາວົກໃນຈຳນວນ 12 ຄົນ.
    - ມາຣະໂກອອກໄປເປັນຜູ້ປ່າວປະກາດຮ່ວມກັບໂປໂລແລະກັບມາກຸງເຢຣູຊາເລັມໃນເຄິ່ງທາງ (ກິຈການ 13:13)
    - ຫລັງຈາກນັ້ນມາ ມາຣະໂກແລະໂປໂລກໍກາຍເປັນເພື່ອນກັນຢ່າງໃກ້ຊິດ (2 ຕີໂມທຽວ 4:11)
    - ມາຣະໂກຄົງຈະບັນທຶກປຶ້ມນີ້ຢູ່ກຸງໂຣມ.
    - ປຶ້ມນີ້ຂຽນຂຶ້ນເພື່ອຢາກສຳແດງວ່າພຣະເຢຊູຄືພຣະເມຊີອາ
    - ປຶ້ມຂ່າວປະເສີດນີ້ຂຽນຂຶ້ນໃນຣະຫວ່າງ ປີ ຄສ 55-65
    - 90 ເປີເຊັນ ຂອງປຶ້ມນີ້ ແມ່ນສອດຄ່ອງກັບພຣະທັມມັດທາຍແລະພຣະທັມລູກາ

    ມາຣະໂກໄດ້ບັນທຶກການອັສຈັນຫລາຍກວ່າປຶ້ມຂ່າວປະເສີດເຫລົ່ມອື່ນໆ

**ນຳພາການສຶກສາພຣະທັມ (ໃຊ້ເວລາ 30)**

2. ພວກເຮົາຈະມາສຶກສາກ່ຽວກັບຣິດອຳນາດທີ່ມີຢູ່ໃນຕົວຂອງພວກເຮົາ. ຣິດອຳນາດສູງຈະມີພລັງອຳນາດຫລາຍ. ຖ້າຜູ້ໃດຫາກມີຣິດອຳນາດໜ້ອຍ ແນ່ນອນຈະຕ້ອງມີພລັງໜ້ອຍ.
   ຕົວຢ່າງ: ຕຳຣວດ (ສູງ)
   - ຄຣູສອນ (ປານກາງ)
   - ຄະນະຣັຖບານ (ສູງ)
   - ການໂຄສະນາ (ຕ່ຳ)
   - ງານອະດິເຣກ (ຕ່ຳ)
   - ພໍ່ແມ່ (ປານກາງ)
   - ພຣະຄັມພີ, ພຣະເຈົ້າ, ພຣະເຢຊູ (ທັງສອງຢ່າງ, ມີສິດອຳນາດສູງ)
3. ໃຫ້ຄົນນຶ່ງອ່ານດັງໆ ມາຣະໂກ 1:21-28 ເຕືອນນັກຮຽນໃຫ້ເອົາໃຈໃສ່ຕໍ່ຄຳທີ່ວ່າ ສິດອຳນາດ.

4. ໃນ ມາຣະໂກ 1:22 ຜູ້ຄົນທັງຫລາຍກໍອັສຈັນໃຈໃນຄຳສັ່ງສອນຂອງພຣະອົງ. ຖາມ: ມາຣະໂກໝາຍຄວາມວ່າຢ່າງໃດໃນທີ່ນີ້? ໃນສະພາບຢ່າງນີ້ ທ່ານຈະເຫັນວ່າສິດອຳນາດຂອງພຣະອົງເປັນແນວໃດ? ທ່ານຈະເວົ້າໄດ້ບໍ່ວ່າພຣະອົງເຮັດເພາະໜ້າທີ່, ຫລືພຣະອົງເຮັດເພື່ອຕ້ອງການຊື່ສຽງ? ຈະແຈ້ງຢູ່ບ່ອນວ່າ ພຣະອົງຢາກສຳແດງໃຫ້ເຫັນສິດອຳນາດຂອງພຣະວິນຍານບໍຣິສຸດ. (ເບິ່ງໃນເຈັ້ງບົດຮຽນ).

5. ຖາມແລະສົນທະນາ: ທ່ານຈະອະທິບາຍຢ່າງໃດໃນການທີ່ພຣະເຢຊູມີຣິດອຳນາດເໜືອຜີ?

6. ອ່ານມາຣະໂກ 1:29-34. ມາຣະໂກບໍ່ໄດ້ກ່າວເຖິງສິດອຳນາດໃນຕອນນີ້. ສົນທະນາ. ແຕ່ພຣະເຢຊູເປັນຜູ້ສຳແດງອອກເອງ. ພວກເຮົາເຂົ້າໃຈວ່າຢ່າງໃດໃນຂໍ້ນີ້.

7. ອ່ານມຣະໂກ 1:35-39 ວາງຄຳຖາມ: ໃນຖ້ອຍຄຳຕອນນີ້ ຄຳໃດທີ່ສຳແດງອອກເຖິງຣິດອຳນາດຂອງພຣະເຢຊູ

8. ຖາມແລະສົນທະນາ: ໃນຂໍ້ໃດທີ່ມາຣະໂກ ບົດທີ 1 ໄດ້ບອກວ່າພຣະເຢຊູເປັນພຣະເມຊີອາ?

9. ອ່ານດັງໆ ມັດທາຍ 28:19-20 ຣິດທານຸພາບໃນສວັນແລະແຜ່ນດິນໂລກ ຊົງມອບໄວ້ແກ່ເຮົາແລ້ວ. ທ່ານຈະຮັບຣິດອຳນາດຈາກພຣະເຢຊູຢ່າງໃດ?

10. ອ້ອນວອນອະທິຖານ ຖວາຍຕົວເຂົ້າເຝົ້າພຣະເຈົ້າ

*ບພ*

# ຄຳແນະນຳສຳລັບຄຣູສອນ

# ບົດຮຽນທີ 2

# <u>ການປິ່ນປົວແລະການອະພັຍໂທດ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້</u>**: ມາຣະໂກ 2:1-12

**<u>ພູມຫລັງຂອງພຣະຄັມພີ</u>**: ມາຣະໂກ 2:1-12

**<u>ຈຸດສຳຄັນສຳລັບບົດຮຽນນີ້:</u>** ພຣະເຢຊູຊົງສຳແດງເອກລັກຂອງຕົນເອງໂດຍການປິ່ນປົວຄົນເປັນຫູ່ອຍແລະການອະພັຍຄວາມຜິດບາບ

**<u>ຄຳຖາມເພື່ອການຄົ້ນຄວ້າ</u>**: ແມ່ນຫຍັງຄືການເຊື່ອມໂຍງລະຫວ່າງຄວາມເຊື່ອ, ການປິ່ນປົວ ແລະການອະພັຍຄວາມຜິດບາບ

**<u>ຈຸດປະສົງຂອງບົດຮຽນນີ້</u>**: ເພື່ອຈະໜູນໃຈໃຫ້ມີຄວາມເຊື່ອ ແລະເຊື່ອວ່າພຣະເຢຊູຄືທີ່ມາຂອງການປິ່ນປົວ, ການໃຫ້ອະພັຍຄວາມຜິດບາບ

## <u>ແຜນການສິດສອນ</u>

### <u>ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)</u>

1. ຄວາມຮັບຜິດຊອບໃນການຮັກສາແລະການສ້ອມແປງເຮືອນຊານ ແມ່ນການປະກອບໄປດ້ວຍກິຈກັມເຊັ່ນ: ຕັດຫຍ້າ, ທຳຄວາມສະອາດຮາງລິນ ແລະລ້າງປ່ອງຢ້ຽມດ້ວຍ. ຫລັງຈາກນັ້ນກໍສ້ອມແປງສິ່ງທີ່ຫັກເພພິເສດເຊັ່ນ: ນ້ຳຮົ່ວຫລືລົມພັດຫລັງຄາ…ຖາມ: ໃຜມີປະສົບການດ້ານແປງເຮືອນຫລືບໍ່? ທ່ານມີຄວາມຮູ້ສຶກຢ່າງໃດ? ແລະທ່ານຈະເຮັດຢ່າງໃດ?
2. ໃນການສຶກສາພຣະຄັມພີໃນວັນນີ້ ພວກເຮົາຈະເຫັນການເຈາະຫລັງຄາລົງມາຫາພຣະເຢຊູທີ່ຢູ່ໃນເຮືອນ, ໂດຍບໍ່ໄດ້ຖາມເຈົ້າຂອງເຮືອນເລີຍ. ການມ້າງຫລັງຄາເຮືອນຄົນອື່ນເປັນບັນຫາໃຫຍ່, ແຕ່ໃນທີ່ນີ້ຊ້ຳພັດບໍ່ມີບັນຫາຫຍັງເລີຍ ພຽງແຕ່ຢາກເຫັນເອກລັກຂອງພຣະເຢຊູເທົ່ານັ້ນ.

### <u>ນຳພາການສຶກສາພຣະທັມ (ໃຊ້ເວລາ 30)</u>

3. ໃຫ້ຄົນນຶ່ງອ່ານພຣະທັມມາຣະໂກ 2:1-12 ແລ້ວກໍໜູນໃຈໃຫ້ນັກຮຽນສົນທະນາໃນຄຳຖາມຕໍ່ໄປນີ້. ຄຣູຈະເປັນຜູ້ນຳພາໃນການສົນທະນານີ້. ໂດຍອີງໃສ່ເຈັ້ງບົດຮຽນ.
   ຖ້າພຣະເຢຊູຫາກມີໂອກາດມາເທສນາໃນໂບດຂອງພວກເຮົາໃນວັນນີ້ ທ່ານຄິດວ່າຝູງຊົນຈະມາຟັງເພິ່ນບໍ່?

ໃນທຸກວັນນີ້ ຄົນຈະມີຄວາມຮັບຜິດຊອບຕໍ່ຄຳເທສນາຂອງເພິ່ນຫລືບໍ່? ຈະເຫັນຄວາມສາມາດໃນການປິ່ນປົວຄົນໄຂ້ຫລືບໍ່?

**<u>ບັນດາຄຣູສອນສາສນາ</u>**

- ພວກເຂົາພາກັນກ່າວຫາພຣະອົງຄືແນວໃດ?
- ພຣະເຢຊູໄດ້ປະກາດບໍວ່າ ພຣະອົງຊົງເປັນພຣະເຈົ້າ? ພຣະຄັມພີໄດ້ຊ່ວຍທ່ານໃນການຕອບຄຳຖາມນີ້ຫລືບໍ່?
- ທ່ານຄິດບໍວ່າເປັນຫຍັງພວກສອນສາສນາຈຶ່ງມີຄວາມເຫັນແຕກຕ່າງ? ແຕກຕ່າງຈາກເພື່ອນສີ່ຄົນຂອງຄົນເປັ້ຍອີກດ້ວຍ. (ເພື່ອນຂອງຄົນເປັ້ຍຄິດຢ່າງໃດຕໍ່ພຣະເຢຊູ?)

**<u>ຄວາມເຊື່ອ</u>**

- ຄວາມເຊື່ອແມ່ນຫຍັງ? (ເບິ່ງ ເຮັບເຣີ 11:1)
- ໃນວັນນັ້ນ ພຣະເຢຊູເຫັນຄວາມເຊື່ອຂອງພວກເຂົາບໍ່?
- ພຣະເຢຊູເຫັນຄວາມເຊື່ອຂອງພວກເຂົາໄດ້ຢ່າງໃດ?
- ພຣະຢຊູຈະເຫັນຄວາມເຊື່ອຂອງພວກເຮົາໄດ້ຢ່າງໃດ?
- ຄົນອື່ນຈະເຫັນຄວາມເຊື່ອຂອງພວກເຮົາໃນພຣະເຢຊູຢ່າງໃດ?
- ແມ່ນຫຍັງຄືການເຊື່ອມຕໍ່ລະຫວ່າງຄວາມເຊື່ອ, ການປິ່ນປົວ ແລະການອະພັຍໂທດ?

**<u>ການປິ່ນປົວແລະການອະພັຍໂທດ</u>**

- ອັນໃດຈະງ່າຍສຳລັບພຣະເຢຊູ ເປັນຫຍັງ? ການປິ່ນປົວຫລືການອະພັຍໂທດບາບ
- ທ່ານຄິດວ່າ ຄົນເປັ້ຍຈະຈື່ຈຳໄດ້ດີບໍ່ ແລະເປັນຫຍັງ? ພຣະເຢຊູຍົກໂທດບາບ, ພຣະເຢຊູປິ່ນປົວ, ຫລືວ່າການກະທຳຂອງເພື່ອນທັງສີ່ຄົນ.

**<u>ຫລັງຄາ</u>**

- ທ່ານຄິດວ່າການເຈາະຫລັງຄາລົງມາຈະມີບັນຫາສຳລັບເຈົ້າຂອງເຮືອນບໍ່? ຖ້າມີ ເປັນຫຍັງ? ແລະຖ້າບໍ່ມີ ເປັນຫຍັງ?
- ຖ້າພຣະເຢຊູຫາກບໍ່ມີການປິ່ນປົວໃນວັນນັ້ນເດ ທຸກຢ່າງຈະເປັນຢ່າງໃດ?

4. ຖາມແລະສົນທະນາ, ແມ່ນຫຍັງຄືບັນຫາສຳຄັນທີ່ສຸດໃນບົດຮຽນໃນວັນນີ້? ເພາະຫຍັງ?

5. ສຳລັບພວກຄຣູສອນສາສນາ ແລະພວກຟາຣີຊາຍ ບັນຫາທີ່ໃຫຍ່ຂອງພວກເຂົາແມ່ນການທີ່ພຣະເຢຊູຊົງອະພັຍບາບ. ສຳລັບພວກເຮົາບັນຫາໃຫຍ່ອາດຈະແມ່ນການເຈາະຫລັງຄາເຮືອນ. ພວກນັກສອນສາສນາມີຄວາມຢ້ານລື່ນ ຢ້ານຄົນອື່ນມີຣິດອຳນາດຫລາຍກວ່າຕົນເອງ.

## <u>ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

6. ຖ້າມີຄົນໃດຄົນນຶ່ງຖາມທ່ານວ່າ: ຈົ່ງແນະນຳຂ້າພະເຈົ້າແດ່ວ່າ ຂ້າພະເຈົ້າຢາກຕາມອົງພຣະເຢຊູ ທ່ານຈະໃຫ້ຄຳແນະນຳເຂົາວ່າຢ່າງໃດ? ທ່ານຈະຊ່ວຍຄົນທີ່ຢູ່ຂ້າງເຮືອນທ່ານ, ທຳງານຢູ່ຂ້າງໆ ທ່ານ, ຄົນທີ່ໄປໂບດກັບທ່ານເອງດ້ວຍ ທ່ານຈະວ່າຢ່າງໃດ?

7. ຕຽມຕົວເຂົ້ານະມັສການ, ກ່ອນອື່ນ ຂໍເຊີນຮ່ວມກັນອ້ອນວອນອະທິຖານ ເພື່ອທຸກຄົນຈະໄດ້ຕຽມພ້ອມ.

*ບພ*

# ຄຳແນະນຳສຳລັບຄຣູສອນ

# ບົດຮຽນທີ 3

# ຄວາມເຂົ້າໃຈຜິດ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້**: ມາຣະໂກ 3:20-35

**ພູມຫລັງຂອງພຣະຄັມພີ**: ມາຣະໂກ 3:7-35

**ຈຸດສຳຄັນສຳລັບບົດຮຽນນີ້:** ຄອບຄົວຍາດພີ່ນ້ອງແລະຜູ້ນຳສາສານາຈາກກຸງເຢຣູຊາເລັມມີຄວາມເຂົ້າໃຈຜິດໃນຕົວຂອງພຣະເຢຊູແລະການປ່າວປະກາດ

**ຄຳຖາມເພື່ອການຄົ້ນຄວ້າ**: ພວກເຮົາຈະມີຄວາມຮັບຜິດຊອບຢ່າງໃດຕໍ່ການໂຈມຕີຫລືການຫາເຣື່ອງຈາກຜູ້ອື່ນ ຫລືຈາກຄອບຄົວຂອງເຮົາເອງ

**ຈຸດປະສົງຂອງບົດຮຽນນີ້**: ເພື່ອຈະໄດ້ຢັ້ງຢືນໃຫ້ເຫັນວ່າການທຳງານໃຫ້ແກ່ພຣະເຈົ້າພ້ອມດ້ວຍການປ່າວປະກາດຕ້ອງເປັນສິ່ງສຳຄັນກວ່າໝູ່.

## ແຜນສຳລັບການສິດສອນ

## ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ໂຢຮັນບົດທີ 3 ໄດ້ບັນທຶການສົນທະນາລະຫວ່າງພຣະເຢຊູກັບນີໂກເດມ ຜູ້ນຳສາສນາຂອງພວກຟາຣີຊາຍ. ພຣະເຢຊູໄດ້ບອກນີໂກເດມວ່າ ຖ້າຜູ້ໃດບໍ່ໄດ້ບັງເກີດໃໝ່ ຜູ້ນັ້ນຈະເຫັນອານາຈັກຂອງພຣະເຈົ້າບໍ່ໄດ້. (ໂຢຮັນ 3:3) ການເກີດໂດຍເນື້ອໜັງກໍມີເນື້ອໜັງຝ່າຍຄອບຄົວ, ການເກີດໂດຍພຣະວິນຍານກໍແມ່ນການເກີດໂດຍຮັບເອົາພຣະເຢຊູເປັນພຣະຜູ້ຊ່ວຍໃຫ້ພົ້ນ ໃນການກະທຳເຊັ່ນນັ້ນກໍໝາຍຄວາມວ່າທ່ານໄດ້ເຂົ້າຮ່ວມໃນຄອບຄົວແຫ່ງພຣະວິນຍານແລ້ວ. ຖາມ: ແມ່ນຫຍັງຄືຄວາມແຕກຕ່າງຣະຫວ່າງເກີດຝ່າຍເນື້ອໜັງແລະເກີດຝ່າຍຈິດວິນຍານ?

2. ວັນນີ້ ພວກເຮົາຈະສຶກສານຳກັນກ່ຽວກັບຄອບຄົວຂອງພຣະເຢຊູໃນແຜ່ນດິນໂລກແລະຄອບຄົວໃນແຜ່ນດິນສວັນ ແລະຄູ່ຕໍ່ສູ້ (ສັດຕຣູ) ຂອງພຣະອົງຈະມີຄວາມເຫັນຢ່າງໃດ? ມາເລີ້ມຕົ້ນທີ່ຄອບຄົວຝ່າຍເນື້ອໜັງກ່ອນ ພຣະເຢຊູມີພໍ່ ແມ່ ນ້ອງຊາຍນ້ອງສາວທີ່ໃຊ້ຊີວິດຢູ່ຮ່ວມກັນມາ. ຖາມ: ທ່ານຄິດວ່າຊີວິດຈະເປັນມາຢ່າງໃດ? (ທັມດາແມ່ນບໍ່)

## ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

3. ໃຫ້ນັກຮຽນຄົນນຶ່ງອ່ານມາຣະໂກ 3:20-21 ອ່ານດັງໆ. ຖາມ: ການໂຕ້ຕອບຂອງຄອບຄົວພຣະເຢຊູເປັນຢ່າງໃດ? ໃຫ້ຕອບຈັກສອງສາມຄົນແລະຄຣູຈະອະທິບາຍ.

4. ເຣື່ອງລາວຂອງພຣະເຢຊູໃນຄອບຄົວແຫ່ງໂລກນີ້ເກີດຂຶ້ນໃນສອງຂໍ້ນີ້ ແລະໃນຂໍ້ 31-34 ຈະໄດ້ເຫັນອີກ. ໃຫ້ຄົນນຶ່ງອ່ານ. ພຣະເຢຊູຊົງຕອບທາງດ້ານຈິດວິນຍານວ່າແນວໃດ?

5. ພວກຜູ້ນໍາສາສນາຈຶ່ງກ່າວວ່າໃຫ້ພຣະອົງ ແລະພະຍາຍາມທີ່ຈະຫລຸດຄຸນຄ່າຂອງພຣະອົງ ບອກວ່າຄົນນີ້ມີຜີເຂົ້າ. ເມື່ອເປັນດັ່ງນັ້ນພຣະເຢຊູກໍກ່າວຄໍາອຸປມາ ໃນຂໍ້ທີ 23-27

6. ໃນຂໍ້ 28-30 ໃຫ້ຄົນນຶ່ງອ່ານດັງໆ. ນີ້ຄືຄໍາຕອບຂອງພຣະເຢຊູ ເພາະພຣະອົງຮູ້ວ່າພວກເຂົາກ່າວຫາພຣະອົງວ່າມີຜີເຂົ້າ. ພວກເຂົາເອົາຣິດອໍານາດຂອງພຣະເຈົ້າໄປໃຫ້ມານຊາຕານ.

7. ຄຣູຕ້ອງອະທິບາຍຢ່າງຈະແຈ້ງກ່ຽວກັບການໝິ່ນປມາດພຣະວິນຍານບໍຣິສຸດ. ພວກຜູ້ນໍາສາສນາພະຍາຍາມທີ່ຈະນໍາຄວາມເຂົ້າໃຈຂອງຝູງຊົນໄປຫາມານຊາຕານ. ພວກເຂົາຢ້ານພຣະອົງລື່ນ, ສຽດສີ, ລົດພຣະອົງລົງຕໍ່າ.

8. ໃຫ້ຄົນນຶ່ງອ່ານ 2 ເປໂຕ 3:9 ໃນຊີວິດຂອງພຣະອົງ ພຣະວິນຍານບໍຣິສຸດຊົງທໍາງານໃນພຣະອົງຕລອດມາ ພຣະອົງບໍ່ໄດ້ຊັກຊ້າ ແຕ່ພຣະອົງບໍ່ຕ້ອງການໃຫ້ໃຜຜູ້ນຶ່ງພິນາດ. ພຣະອົງພະຍາຍາມປົກປ້ອງພວກເຮົາໃຫ້ພົ້ນຈາກບາບ. ຖ້າພວກເຮົາຫາກປະຕິດເສດພຣະອົງ ພວກເຮົາກໍປະຕິເສດພຣະວິນຍານບໍຣິສຸດ.

## <u>ນໍາບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

9. ແບ່ງຫ້ອງອອກເປັນສອງຫລືສາມກຸ່ມເພື່ອຈະໄດ້ສົນທະນາກັນ. ຄື: ເພື່ອນທໍາງານດ້ວຍກັນເກີດມີບັນຫາດ້ານຄອບຄົວ, ທ່ານກໍຮູ້ທັນທີໂລດວ່າແມ່ນຝ່າຍເນື້ອກາຍ. ທ່ານຈະແກ້ໄຂຊ່ວຍເຂົາດ້ວຍຄໍາແນະນໍາຝ່າຍຈິດວິນຍານບໍ,ຈະແກ້ໄຂຢ່າງໃດ? ຈະເອົາພຣະເຢຊູເຂົ້າມາມີສ່ວນຮ່ວມຄືແນວໃດ?
ຖາມ: ຈະມີຜົນປໂຍດອັນໃດບໍ່ ຖ້າເຮົາຫາກເຂົ້າຮ່ວມໃນຄອບຄົວຂອງພຣະເຢຊູ?
ຖາມ: ທ່ານຈະຮູ້ໄດ້ຢ່າງໃດວ່າທ່ານໄດ້ເຂົ້າຮ່ວມໃນຄອບຄົວຂອງພຣະເຢຊູແລ້ວ?

10. ປິດດ້ວຍການອ້ອນວອນອະທິຖານ ແນໃສ່ຄອບຄົວຝ່າຍໂລກແລະຄອບຄົວຝ່າຍຈິດວິນຍານ ແລະຂອບພຣະຄຸນພຣະເຈົ້າທີ່ພຣະອົງໃຫ້ເຮົາເຂົ້າມາຢູ່ໃນຄອບຄົວຂອງພຣະອົງ.

*ບພ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 4
# <u>ເອົາຊະນະຄວາມມືດ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ມາຣະໂກ 5:1-20

**<u>ພູມຫລັງຂອງພຣະຄັມພີ:</u>** ມາຣະໂກ 4; 5:1-20

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ອົງພຣະເຢຊູໄດ້ເປີດພຣະກຳລັງຂອງພຣະອົງໃນເຂດແດນທີ່ມີຄວາມມືດຄອບງຳ ແລະຕໍ່ຊາຍທີ່ມີຜີເຂົ້າ.

**<u>ຄຳຖາມເພື່ອການຄົ້ນຄວ້າ:</u>** ພວກເຮົາຍິນດີຈະປະເຊີນຕໍ່ໂລກທີ່ເຕັມໄປດ້ວຍຄວາມມືດຊ່ຳໃດ?

**<u>ຈຸດປະສົງຂອງບົດຮຽນ:</u>** ເລືອກທີ່ຈະປະເຊີນກັບໂລກແຫ່ງຄວາມມືດດ້ວຍຣິດອຳນາດຂອງອົງພຣະເຢຊູ.

## ບົດນຳ

ປຶ້ມມາຣະໂກນີ້ໄດ້ກ່າວເຖິງຄຳສອນຂອງອົງພຣະເຢຊູຢ່າງມີອຳນາດ ແລະການກະທຳອັສຈັນທີ່ພວກເຮົາໄດ້ຮູ້ນັ້ນເຮັດໃຫ້ເຫັນເຖິງຣິດອຳນາດ. ມາຣະໂກ 4 ເປັນບົດສອນຝູງຊົນເຖິງຣາຊອານາຈັກຂອງພຣະເຈົ້າ. ຫລັງຈາກນີ້ແລ້ວພຣະອົງຊົງຊວນພວກສາວົກຂ້າມໄປຍັງອີກຟາກນຶ່ງຂອງທະເລຄາລີເລ. ເວລາໄປເຖິງຟາກນັ້ນອົງພຣະເຢຊູຈະໄດ້ພົບກັບຄົນເມືອງໃຫຍ່ທີ່ມີສິດພິເສດແລະຮັ່ງມີເປັນດີໃນສມັຍການປົກຄອງຂອງຄົນກຣີກ. (ເມືອງນີ້ເຄີຍເອີ້ນວ່າ 10 ເມືອງ).

ໃນເວລາຂີ່ເຮືອຂ້າມໄປນັ້ນອົງພຣະເຢຊູໄດ້ນອນຫລັບສະບາຍເພາະພຣະອົງເມື່ອຍ ເຖິງແມ່ນລົມພະຍຸພັດແຮງກະທົບຕໍ່ເຮືອນ້ອຍໆໃນສັດຕະວັດນຶ່ງກໍຕາມ. ຄວາມຈິງແລ້ວເຫັນວ່າເຮືອແບບນີ້ບໍ່ສາມາດຕ້ານກັບລົມພະຍຸໄດ້ ພວກສາວົກພາກັນຕົກໃຈຢ້ານວ່າເຮືອຈະຫລົ້ມແລະອາດຢ້ານວ່າຕົນເອງແລະອົງພຣະເຢຊູຈະຕາຍຕົກນ້ຳ ພວກເຂົາຈຶ່ງປຸກພຣະອົງໃຫ້ຕື່ນ. ເມື່ອຕື່ນຂຶ້ນມາອົງພຣະເຢຊູໄດ້ສັ່ງໃຫ້ລົມພະຍຸໃຫຍ່ນັ້ນຢຸດແລະລົມນັ້ນກໍຟັງຄວາມພຣະອົງ. ມາຣະໂກ 4:35-41 ໄດ້ເປີຍເຜີຍເຖິງຣິດອຳນາດຂອງອົງພຣະເຢຊູເໜືອທັມມະຊາດ.

## ແນະນຳການສອນ

### ແຜນການສອນ-ວິທີສອນນັ້ນອາດສາມາດໃຊ້ແຕກຕ່າງກັນ

1. ເວົ້າວ່າ, ພວກເຮົາໄດ້ຮັບການໃຫ້ອະພັຍ ແລະຮັບເອົາອົງພຣະເຢຊູດ້ວຍຄວາມເຊື່ອ. ພວກເຮົາທຸກຄົນມີຄຳພະຍານສ່ວນຕົວໃນການມາຮັບເຊື່ອ: ບອກເຖິງຊີວິດຂອງທ່ານກ່ອນມາຮັບເຊື່ອ, ເວລາມາຮັບເຊື່ອແລ້ວ, ດຽວນີ້ອົງພຣະເຢຊູໄດ້ຊ່ອຍຊີວິດຂອງທ່ານຢ່າງໃດ?

2. ຂຽນໃສ່ກະດານກ່ອນເລີ້ມຫ້ອງຮຽນ ໃຫ້ຂຽນຄຳຖາມດັ່ງຕໍ່ລົງໄປນີ້:
    - ມີຂໍ້ພຣະຄັມພີໃດທີ່ທ່ານຢາກຈະຖາມອົງພຣະເຢຊູ?
    - ມີຂໍ້ພຣະຄັມພີໃດທີ່ທ່ານຢາກຈະຖາມຊາຍທີ່ພີສີງ?

ແບ່ງຫ້ອງຮຽນເປັນ 4 ກຸ່ມຕາມຄົນທີ່ມີ.

ກຸ່ມນຶ່ງ: ອ່ານ ມາຣະໂກ 5:1-5

ກຸ່ມສອງ: ອ່ານ ມາຣະໂກ 5:6-10

ກຸ່ມສາມ: ອ່ານ ມາຣະໂກ 5:11-15

ກຸ່ມສີ່: ອ່ານ ມາຣະໂກ 5:16-20

ບອກໃຫ້ແຕ່ລະກຸ່ມອ່ານແລະຊອກຫາຂໍ້ທີ່ເຂົ້າໃຈຍາກ ຫລັງຈາກນັ້ນແລ້ວຂຽນຂໍ້ນັ້ນໃສ່ກະດານ. ບອກໃຫ້ແຕ່ລະກຸ່ມໃຊ້ເວລາປະມານ 15 ນາທີສຶກສາໂດຍໃຊ້ປຶ້ມອື່ນອີກປະກອບ ສຸດທ້າຍ ເອີ້ນແຕ່ລະກຸ່ມມາລາຍງານໃຫ້ທຸກຄົນຟັງຕາມການຕົກລົງເຫັນດີຈາກກຸ່ມຕົນເອງ.

3. ບອກແຕ່ລະກຸ່ມອ່ານຂໍ້ພຣະຄັມພີອອກສຽງດັງຕາມຄຣູມອບໃຫ້ ເລືອກເອົາຂໍ້ທີ່ຍາກມາຖາມອົງພຣະເຢຊູເຖິງຄວາມໝາຍ.
4. ບອກໃຫ້ແຕ່ລະກຸ່ມຕັ້ງຄຳຖາມທີ່ພວກເຂົາຢາກຖາມຄົນທີ່ພີສີງ.
5. ຖາມ ແລະສົນທະນາກັນເຖິງເຣື່ອງຕໍ່ລົງໄປນີ້:
    - ຊີວິດໃນອະດີດຂອງທ່ານມີພົນສະທ້ອນຕໍ່ຊີວິດຂອງທ່ານທີ່ເຊື່ອໃນອົງພຣະເຢຊູແນວໃດ? ອົງພຣະເຢຊູຈະໃຊ້ຊີວິດທີ່ຜ່ານມາຂອງທ່ານແນວໃດ? ທ່ານອາດຈະເປັນຄົນຊົ່ວຊ້າຫລາຍຢ່າງເພື່ອທ່ານຈະນຳເອົາພຣະກຽດແລະສະງ່າຣາສີມາສູ່ອົງພຣະເຢຊູ.
    - ທ່ານຈະຮູ້ສຶກວ່າຕົນເອງມີບາບແລະຕ້ອງການກຳຈັດມັນອອກໄປຈາກຊີວິດແນວໃດ?
    - ອົງພຣະເຢຊູໄດ້ສອນທ່ານໃຫ້ກຳຈັດກັບຄວາມບາບແນວໃດ?
    - ມີຄົນອື່ນໃຫ້ຄຳໜູນໃຈທ່ານເພື່ອໃຫ້ເດີນຕໍ່ໄປດ້ວຍຄວາມເຊື່ອແນວໃດ?

*ສບ. ບຸນຈັນ ວົງສຸຣິດທຣ໌*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 5
# ປະຕິເສດ ແລະການຕອບສນອງ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ມາຣະໂກ 6:1-13

**ພູມຫລັງຂອງພຣະຄັມພີ:** ມາຣະໂກ 6:1-13

**ຈຸດສຳຄັນຂອງບົດຮຽນນີ້:** ຄົນໃນບ້ານເມືອງປະຕິເສດ ແລະອົງພຣະເຢຊູໄດ້ສົ່ງພວກສາວົກອອກໄປເພື່ອເປັນການຕອບສນອງ.

**ຄຳຖາມເພື່ອການຄົ້ນຄວ້າ:** ທ່ານມີປະຕິກິຣິຍາຢ່າງໃດທີ່ເປັນເຫດໃຫ້ພຣະເຈົ້າບໍ່ສາມາດເຮັດກິຈການຜ່ານທາງຊີວິດຂອງທ່ານ?

**ຈຸດປະສົງຂອງບົດຮຽນ:** ເພື່ອສຳຣວດປະຕິກິຣິຍາຂອງຂ້າພະເຈົ້າເຖິງເຣື່ອງຂອງພຣະເຈົ້າແລະຕັດສິນໃຈເຊື່ອຟັງພຣະອົງ.

## ບົດນຳ

ມາຣະໂກໄດ້ເວົ້າເຖິງຄົນໃນບ້ານເມືອງຂອງອົງພຣະເຢຊູ ຄືເມືອງນາຊາເຣັດທີ່ໄດ້ປະຕິເສດພຣະອົງ. ພຣະຄັມພີໄດ້ກ່າວຢ່າງແຈ່ມແຈ້ງວ່າອົງພຣະເຢຊູໄດ້ປະສູດຢູ່ເມືອງເບັດເລເຮັມ. ປຶ້ມມັດທາຍໄດ້ກ່າວເຖິງເມືອງເບັດເລເຮັມ ຊຶ່ງເປັນຄຳຕອບຂອງພວກຫົວໜ້າສາສນາຕໍ່ກະສັດເຮໂຣດຜູ້ຍິ່ງໃຫຍ່ (ມທ 2), ແຕ່ເຫັນວ່າປຶ້ມລູກາໄດ້ບອກເຖິງພຣະກຳເນີດຂອງອົງພຣະເຢຊູໃນເມືອງເບັດເລເຮັມ (ລກ 2). ມັດທາຍໄດ້ອະທິບາຍວ່າມີເທວະດາຕົນນຶ່ງໄດ້ມາເຕືອນໂຢເຊບໃຫ້ພາອົງພຣະເຢຊູໜີໄປປະເທດເອຢິບເພາະກະສັດເຮໂຣດຊອກຂ້າພຣະກຸມມານນ້ອຍ. ໂຢເຊບກໍໄດ້ເຮັດຕາມ.

ຫລັງຈາກກະສັດເຮໂຣດຜູ້ຍິ່ງໃຫຍ່ໄດ້ຕາຍໄປ, ກໍມີເທວະດາໄປບອກໃຫ້ໂຢເຊບກັບຄືນໄປຍັງແຜ່ນດິນອິສຣາເອນອີກ. ແຕ່ເຫັນວ່າລູກຊາຍຂອງກະສັດເຮໂຣດຜູ້ມີຊື່ວ່າ ອາເຄລາວ ໄດ້ປົກຄອງແທນເປັນຄົນທີ່ໂຫດຮ້າຍເໝືອນກັບພໍ່ ແລະໂຢເຊບກໍຢ້ານທີ່ຈະກັບໄປທີ່ນັ້ນ. ຫລັງຈາກເທວະດາບອກໂຢເຊບແລ້ວລາວກໍເລີຍໄປຕັ້ງຖິ່ນຖານຢູ່ເມືອງນາຊາເຣັດ ແຂວງຄາລີເລ ຊຶ່ງເປັນບ່ອນພຣະເຢຊູຈະເຣີນໃຫຍ່ຂຶ້ນ ເຖິງແມ່ນພຣະອົງໄດ້ປະສູດທີ່ເມືອງເບັດເລເຮັມ.

ປຶ້ມຂ່າວປະເສີດທັງສາມເຫຼັ້ມໄດ້ກ່າວເຖິງອົງພຣະເຢຊູຮັບໃຊ້ໃນເມືອງນາຊາເຣັດ. ປຶ້ມລູກາຍັງບອກວ່າອົງພຣະເຢຊູໄດ້ເທສນາໃນໂຮງທັມມະສາລາໃນເມືອງນີ້ຊຶ່ງເປັນເວລາຝູງຊົນໄດ້ຮູ້ຈັກກັບພຣະອົງດີ ອີງຕາມປຶ້ມລູກາໄດ້ບອກເຖິງອົງພຣະເຢຊູໄດ້ຖືກທົດລອງໃນປ່າດົນຊາຍ (ລກ 4:16-30). ມາຣະໂກ ແລະມັດທາຍກໍໄດ້ກ່າວເຖິງເຣື່ອງນີ້ຄືກັນວ່າ ອົງພຣະເຢຊູໄດ້ມາຍັງບ້ານເກົ່າອີກໃນເຂດແດນແຂວງຄາລີເລ.

## ແນະນຳການສອນ

### ແຜນການສອນ-ວິທີສອນນັ້ນອາດສາມາດໃຊ້ແຕກຕ່າງກັນ

6. ເອົາເຄື່ອງມືຂອງຊ່າງໄມ້ໃຊ້ບາງຢ່າງເຂົ້າມາໃນຫ້ອງຮຽນ. ບອກໃຫ້ສະມາຊິກເບິ່ງເຄື່ອງມືຂອງຊ່າງໄມ້ ແລະຖາມວ່າມີຄວາມນຶກຄິດແນວໃດມາກ່ອນທີ່ຈະເຊື່ອໃນອົງພຣະເຢຊູ ເພາະພຣະອົງເປັນລູກຊ່າງໄມ້ ແລະເຮັດໃຫ້ທ່ານບໍ່ຢາກຕິດຕາມ ຫລືເຊື່ອໃນພຣະອົງ? ວັນນີ້ພວກເຮົາຈະໄດ້ຮຽນເຣື່ອງຄວາມຈິງວ່າອົງພຣເຢຊູແມ່ນໃຜກັນແທ້?
7. ໃຫ້ຄົນນຶ່ງອາສາສມັກເປັນນັກຂ່າວເຣື່ອງຂ່າວໃໝ່ໆ. ສົ່ງຂໍ້ຄວາມໄປຫານັກຂ່າວທາງໂທຣະສັບເພື່ອລາວຈະໄດ້ອ່ານຂ່າວດັ່ງຕໍ່ໄປນີ້:
   "ມີຄົນເປັນຈຳນວນຫລາຍໄດ້ຕິດຕາມອົງພຣະເຢຊູເພາະພຣະອົງໄດ້ເຮັດການອັສຈັນໃນແຂວງຄາລີເລ. ພວກເຮົາໄດ້ເຫັນວ່າອົງພຣະເຢຊູໄດ້ໄລ່ຜີອອກຈາກຄົນ, ປົວຜູ້ຍິງເລືອດຕົກ, ແລະເຮັດໃຫ້ເດັກຍິງຕາຍໄປແລ້ວຄືນມາອີກ. ພວກເຮົາໄດ້ຮັບຂ່າວວ່າເວລານີ້ພຣະອົງກຳລັງເດີນທາງໄປຍັງບ້ານນາຊາເຮັດບ່ອນພຣະອົງຈະເຣີນໃຫຍ່ຂຶ້ນ".
8. ແບ່ງຫ້ອງຮຽນເປັນ 4 ກຸ່ມ ຕາມຈຳນວນຄົນທີ່ມີ ບອກວ່າວັນນີ້ພວກເຂົາເປັນນັກຂ່າວ "ທີມຂ່າວປະຈຳເມືອງນາຊາເຮັດ" ບອກໃຫ້ຄົນອ່ານ ມາຣະໂກ 6:1-6 ອອກສຽງດັງ. ບອກໃຫ້ແຕ່ລະກຸ່ມຂຽນເຣື່ອງຕາມຄຳເວົ້າດັ່ງນີ້: "ບໍ່ມີບ່ອນໃດເໝືອນບ້ານເຮົາ" ບອກໃຫ້ແຕ່ລະກຸ່ມຂຽນເປັນໜັງສືພິມບອກເຖິງຈຸດປະສົງທີ່ພຣະເຢຊູມາບ້ານ, ບອກເຖິງຄອບຄົວແລະເພື່ອນຜູ້ທີ່ບໍ່ໄດ້ເຫັນພຣະອົງມາດົນນານແລ້ວ, ພວກເຂົາຕ້ອນຮັບພຣະເຢຊູແນວໃດ? ບອກໃຫ້ແຕ່ລະກຸ່ມລາຍງານໃຫ້ທຸກຄົນໄດ້ຟັງ.
9. ບອກໃຫ້ຄົນນຶ່ງອ່ານ ມາຣະໂກ 6:6-13 ອອກສຽງດັງ ໆ. ກ່າວວ່າອົງພຣະເຢຊູຢູ່ໃນເມືອງນາຊາເຮັດ ແລະພວກສາວົກກໍຢູ່ກັບພຣະອົງ.
10. ກ່າວວ່າ ຄວາມຄິດເກົ່າໆ ທີ່ເຮົາມີສາມາດເຮັດໃຫ້ພວກເຮົາບໍ່ຍອມເຮັດຕາມອົງພຣະເຢຊູສັ່ງສອນເໝືອນກັບຄົນໃນເມືອງນາຊາເຮັດ ພວກເຂົາມີຄວາມຄິດເກົ່າໆ ຄືເຫັນພຣະອົງເປັນພຽງລູກຊ່າງໄມ້ເປັນຄົນທຸກຍາກ ອາດເປັນລູກບໍ່ຖືກກົດໝາຍ ພວກເຂົາເລີຍບໍ່ຍອມຮັບ ໃນທີ່ສຸດພວກເຂົາເລີຍບໍ່ເຫັນການອັສຈັນທີ່ອົງພຣະເຢຊູເຄີຍກະທຳມາໃນບ່ອນອື່ນໆ.

*ສບ. ບຸນຈັນ ວົງສຸຣິດທ໌*

# ຄຳແນະນຳສຳລັບຄຣູສອນ

# ບົດຮຽນທີ 6

# <u>ສິ່ງສານແຕ່ພາຍນອກ ກົງກັບບໍຣິສຸດທາງໃນ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ມາຣະໂກ 7:1-23

**<u>ພູມຫລັງຂອງພຣະຄັມພີ:</u>** ມາຣະໂກ 7:1-23

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ອົງພຣະເຢຊູໄດ້ຕີຄວາມໝາຍເພີ້ມເພື່ອຈະກາຍເປັນຄົນບໍຣິສຸດໄດ້.

**<u>ຄຳຖາມເພື່ອການຄົ້ນຄວ້າ:</u>** ທ່ານໄດ້ຍຶດຖືເອົາທຳນຽມສາສນາທີ່ມະນຸດສ້າງຂຶ້ນຢ່າງໃດ?

**<u>ຈຸດປະສົງຂອງບົດຮຽນ</u>**: ເພື່ອສຳຣວດເບິ່ງວ່າຂ້າພະເຈົ້າໄດ້ມີຄວາມຈົງຮັກພັກດີຕໍ່ທຳນຽມສາສນາທີ່ມະນຸດສ້າງຂຶ້ນ ແລະເພື່ອຈະຍຶດເອົາການເປັນຄົນບໍຣິສຸດຕາມພຣະເຈົ້າສັ່ງສອນ.

## ບົດນຳ

ປຶ້ມມາຣະໂກໄດ້ກ່າວເຖິງຈິດວິນຍານທີ່ໝົດຄ່າເມື່ອເຮັດຕາມທຳນຽມຂອງພວກເຖົ້າແກ່ຄົນຢິວ ຄືເປັນທີ່ຮູ້ຈັກວ່າທຳນຽມສືບທອດມາດ້ວຍເຣື່ອງທີ່ເລົ່າໃຫ້ຟັງດ້ວຍຄຳເວົ້າເທົ່ານັ້ນ. ພວກເຂົາຖືວ່າຄຳເວົ້າທີ່ເລົ່າໃຫ້ຟັງນັ້ນເປັນກົດຂອງໂມເຊ. ແຕ່ເຫັນວ່າອາຈານພວກຢິວພະຍາຍາມທີ່ຈະອະທິບາຍກົດບັນຍັດນີ້ຫລາຍໆແບບ. ຄົນສາມັນອາດບໍ່ຮູ້ຈັກຄວາມແຕກຕ່າງເຖິງກົດບັດຍັດຂອງໂມເຊ ແລະຄຳເພີ້ມເຕີມຈາກພວກອາຈານຄົນຢິວ. ພວກຜູ້ນຳສາສນາໃຈຮ້າຍເມື່ອໄດ້ຍິນອົງພຣະເຢຊູກ່າວວ່າກົດບັດຍັດນີ້ບໍ່ແມ່ນຂອງແທ້ ບໍ່ໄດ້ມາຈາກພຣະເຈົ້າ, ແຕ່ມາຈາກພວກເຖົ້າແກ່ຊຶ່ງຖືວ່າເປັນທຳນຽມ.

ມາຣະໂກໄດ້ກ່າວວ່າຫົວໜ້າສາສນາບໍ່ດີໃຈນຳອົງພຣະເຢຊູເພາະພຣະອົງຖືວ່າທຳນຽມທີ່ສືບຕໍ່ມານັ້ນເປັນພຽງຄຳສອນຈາກພວກເຖົ້າແກ່ເທົ່ານັ້ນ. ໃນມາຣະໂກ 2 ພວກຟາຣີຊາຍມີຄຳຖາມວ່າເປັນຫຍັງສາວົກຂອງອົງພຣະເຢຊູບໍ່ຖືສິນອົດອາຫານເໝືອນກັບສາວົກຂອງໂຢຮັນ (ມຣກ 2:18). ພວກຟາຣີຊາຍຍັງມີຄຳຖາມອົງພຣະເຢຊູວ່າ ເປັນຫຍັງພວກສາວົກຈຶ່ງເດັດກິນເຂົ້າສາລີໃນວັນຊະບາໂຕ (ມຣກ 2:23-24). ອົງພຣະເຢຊູເອງຍັງປົວຄົນໃນວັນຊະບາໂຕອີກຄືກັນ ເພາະພວກຟາຣີຊາຍຖືວ່າເຮັດຢ່າງນັ້ນເປັນການເຮັດວຽກ ແລະຜິດຕໍ່ກົດບັນຍັດທີ່ກ່າວວ່າ ຈົ່ງຮັກສາວັນຊະບາໂຕໃຫ້ບໍຣິສຸດ.

ມາຣະໂກ 7 ເມື່ອພວກຟາຣີຊາຍຫາເຣື່ອງວ່າພວກສາວົກກິນເຂົ້າບໍ່ລ້າງມື ບໍ່ແມ່ນພວກສາວົກບໍ່ລ້າງມືແຕ່ພວກສາວົກບໍ່ໄດ້ຊຳຣະໃຫ້ຖືກຕາມພິທີ. ອົງພຣະເຢຊູເຊື່ອຟັງກົດບັງຍັດຈາກພຣະເຈົ້າ ແຕ່ພຣະອົງບໍ່ຫົວຊາທຳນຽມທີ່ພວກເຖົ້າແກ່ໄດ້ເພີ້ມໃສ່. ແນ່ນອນອົງພຣະເຢຊູບໍ່ໄດ້ທຳລາຍກົດຂອງໂມເຊ ແຕ່ພຣະອົງເຮັດໃຫ້ເຫັນຄວາມໝາຍອັນແທ້ຈິງຂອງກົດບັດຍັດ ຄວາມໝາຍຂອງຄວາມບໍຣິສຸດ ອົງພຣະເຢຊູໄດ້ເທສນາທີ່

ຈ້າຍພູຊຶ່ງໄດ້ບອກວ່າພຣະອົງບໍ່ໄດ້ທຳລາຍກົດບັດຍັດຂອງໂມເຊແຕ່ຢ່າງໃດ ແທ້ຈິງພຣະອົງໄດ້ເຮັດໃຫ້ກົດບັດຍັດຂອງໂມເຊສຳເຣັດລົງ (ມທ 5:18).

## ແນະນຳການສອນ

### ແຜນການສອນ-ວິທີສອນນັ້ນອາດສາມາດໃຊ້ແຕກຕ່າງກັນ

11. ບອກໃຫ້ສະມາຊິສມັກຫລິ້ນລະຄອນສັ້ນເຣື່ອງ "ມືເປື້ອນ ແລະ ຄວາມຄິດເປື້ອນ" ບອກວ່າຕາມພຣະຄັມພີກ່າວວ່າມືເປື້ອນດີກວ່າມີຄວາມຄິດຊົ່ວ. ຕົວຢ່າງມືເປື້ອນກິນເຂົ້າບໍ່ທຳລາຍຄົນອື່ນ ແຕ່ມີຄວາມຄິດຊົ່ວຊ້າຈະເຮັດໃຫ້ຜູ້ອື່ນເປັນທຸກທີ່ສຸດ. ຊຶ່ງກ່າວວ່າພຣະເຈົ້າເຫັນທາງໃນຈິດໃຈ ແຕ່ມະນຸດເຫັນພຽງຂ້າງນອກ.
12. ຮ້ອງຂໍໃຫ້ມີຄົນສມັກອ່ານ ມາຣະໂກ 7:6-9 ອອກສຽງດັງ. ຢາຍຈານເຈັ້ຽໃຫ້ສະມາຊິທຸກຄົນ ແລະບອກໃຫ້ແຕ່ລະຄົນແຕ້ມຮູບໜ້າຄົນໃສ່ຈານເຈັ້ຽນັ້ນ. ໃຫ້ປີ້ນຈານເຈັ້ຽໄປອີກທາງນຶ່ງ ໃຫ້ຕອບຄຳຖາມວ່າເປັນຫຍັງອົງພຣະເຢຊູເອີ້ນພວກຟາຣີຊາຍ ແລະຄຣູສອນເປັນຄົນໜ້າຊື່ໃຈຄົດ, ເປັນເໝືອນຄົນໃສ່ໜ້າກາກ? ບອກວ່າພວກຟາຣີຊາຍປາກົດວ່າໃຫ້ກຽດຕໍ່ພຣະເຈົ້າດ້ວຍຄຳເວົ້າ ຕາມກົດບັດຍັດທີ່ສືບມາຈາກທຳນຽມຂອງພວກເຖົ້າແກ່ຊຶ່ງມາຈາກມະນຸດ.
13. ອ່ານ ມາຣະໂກ 7:10-13, ອົງພຣະເຢຊູໄດ້ກ່າວເຖິງສິ່ງນຶ່ງກົງກັນຂ້າມກັບຜູ້ນຳສາສນາພາກັນເຮັດຢູ່. ແມ່ນຫຍັງເປັນສິ່ງທີ່ອົງພຣະເຢຊູໄດ້ຖາມພວກຟາຣີຊາຍເຣື່ອງທຳນຽມ?
14. ແບ່ງຫ້ອງເປັນສອງກຸ່ມ.

    ກຸ່ມ 1. ບອກໃຫ້ຄົນນຶ່ງອ່ານ ມາຣະໂກ 7:14-23 ອອກສຽງດັງ. ຖາມວ່າຄວາມບໍຣິສຸດເປັນແນວໃດ?

    ກຸ່ມ 2. ບອກໃຫ້ຄົນນຶ່ງອ່ານ ມາຣະໂກ 7:14-23 ອອກສຽງດັງ. ຖາມວ່າອັນໃດເຮັດໃຫ້ເປື້ອນ ຫລືເປັນຄວາມບາບ?
15. ໃຫ້ນັກຮຽນເອົາບົດຮຽນມາປະກອບໃຊ້ ອ່ານສຸພາສິດ 4:23 ອອກສຽງດັງ ແລະນຳພາອະທິຖານປິດ

*ສບ. ບຸນຈັນ ວົງສຸຣິດທຣ໌*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 7
# ການສາຣະພາບທີ່ຖືກຕ້ອງ ແລະຢາກແກ້ຕົວຢ່າງສຸດຂີດ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ມາຣະໂກ 8:27-38; 9:1

**ພູມຫລັງຂອງພຣະຄັມພີ:** ມາຣະໂກ 8:27-38; 9:1

**ຈຸດສຳຄັນຂອງບົດຮຽນນີ້:** ເປໂຕໄດ້ສາຣະພາບທີ່ຖືກຕ້ອງ, ແຕ່ຍັງຂາດຄວາມເຂົ້າໃຈເຖິງການປະກາດຮັບໃຊ້.

**ຄຳຖາມເພື່ອການຄົ້ນຄວ້າ:** ແມ່ນຫຍັງເປັນການປະກາດຮັບໃຊ້ອັນແທ້ຈິງຂອງອົງພຣະເຢຊູ?

**ຈຸດປະສົງຂອງບົດຮຽນ:** ເພື່ອເຂົ້າໃຈໃຫ້ດີແລະຍຶດເອົາການກ້າຫານໃນການເປັນສາວົກອັນແທ້ຈິງ.

## ບົດນຳ

ເມືອງກາຊາເຣັຽຟີລິບປອຍເປັນບ່ອນຄົນຮູ້ຈັກດີວ່າ ບ່ອນເປໂຕສາຣະພາບວ່າອົງພຣະເຢຊູຊຶ່ງເປັນພຣະຄຣິດ ພຣະບຸດຂອງພຣະເຈົ້າ. ເມືອງນີ້ເປັນບ່ອນສວຍງາມຕັ້ງຢູ່ທາງພາກເໜືອຂອງທະເລຄາລີເລປະມານ 25 ໄມຈາກເມືອງເບັດຊາດີອາ ເປັນເຂດແດນການປົກຄອງຂອງກະສັດເຮໂຣດ ຟີລິບຜູ້ເປັນລູກຊາຍຂອງກະສັດເຮໂຣດ ຜູ້ຍິ່ງໃຫຍ່. ສະຖານທີ່ນີ້ເປັນສູນກາງປະກາດຂອງອົງພຣະເຢຊູທາງພາກເໜືອໃນເມືອງນີ້ຄົນໃຊ້ທຳນຽມພວກກຣີກແລະກຳນັບຖືພຣະເຈົ້າຂອງຊາວກຣີກຄື ພຣະແພນ ຊຶ່ງອອກມາຈາກຄຳວ່າ ແພນນີອາ. ກະສັດຟີລິບໄດ້ສ້າງເມືອງນີ້ ແລະໃສ່ຊື່ໃໝ່ວ່າ ກາຊາເຣັຽຟີລິບປອຍເພື່ອເປັນກຽດແກ່ຈັກກະພັດ ທາຍເບຣິອາສ ແລະຕົນເອງ.

ຄົນໃນເມືອງນີ້ໄດ້ນັບຖືພຣະອື່ນໆ ຊຶ່ງເປັນເຫດໃຫ້ອົງພຣະເຢຊູຕັ້ງຄຳຖາມຂຶ້ນມາເພື່ອຢາກຖາມພວກສາວົກວ່າພວກເຂົາໄດ້ຍິນເຖິງເຣື່ອງພຣະອົງແນວໃດ? ສ່ວນພວກເຂົາເດມີຄວາມຄິດເໝືອນຄົນພວກອື່ນ ຫລື ບໍ່? ໃຫ້ພວກເຂົາພາກັນຕອບເຖິງເຣື່ອງອົງພຣະເຢຊູວ່າເປັນໃຜ? ຕໍ່ມາຊື່ສຽງອັນໂດ່ງດັງຂອງອົງພຣະເຢຊູກຳລັງຖືກຕໍ່ຕ້ານຈາກຜູ້ນຳຫົວໜ້າສາສນາ. ພວກເຮົາຍັງເຫັນອີກວ່າພຣະອົງເຄີຍກະທຳການອັສຈັນ ແລະເວລານີ້ອົງພຣະເຢຊູສມັກເຂົ້າໄປສູ່ໄມ້ກາງແຂນຕາມເປົ້າໝາຍທີ່ພຣະເຈົ້າມີໄວ້ ແຕ່ຄົນສ່ວນຫລາຍຄິດວ່າສິ່ງພຣະເຢຊູກຳລັງເຮັດນັ້ນເປັນຈຸດອ່ອນແອ.

ອົງພຣະເຢຊູເຫັນພາບລ່ວງໜ້າກ່ອນເຫດການວ່າອີກບໍ່ນານພຣະອົງຈະໄດ້ຮັບຄວາມທົນທຸກທໍຣະມານ ແລະຕາຍເພື່ອຄວາມຜິດບາບຂອງມະນຸດຊາດໃນໂລກ. ພຣະອົງຮູ້ແນ່ວ່າການທີ່ພຣະອົງເຮັດຢ່າງນັ້ນເປັນການທົດສອບຄວາມເຊື່ອຂອງພວກສາວົກ ດັ່ງນັ້ນ, ພຣະເຢຊູໄດ້ຕຽມພວກເຂົາໃຫ້ຮັບເອົາສິ່ງນັ້ນເອົາໄວ້. ປຶ້ມລູກາໄດ້ກ່າວເຖິງປໂຍດອັນສຳຄັນຂອງການຮູ້ລ່ວງໜ້າໄວ້ກ່ອນ. “ຄັນຈວນເວລາທີ່ພຣະອົງຈະຖືກຮັບ

ຂຶ້ນເມືອນັ້ນ ພຣະອົງຊົງຕັ້ງພຣະທັຍແນ່ວແນ່ຈະໄປສູ່ກຸງເຢຣູຊາເລັມ” (ລູກາ 9:51). ກ່ອນພຣະອົງຈະຖືກທົນທຸກທໍຣະມານ ພຣະອົງຕ້ອງການຢາກໃຫ້ພວກສາວົກເວົ້າຈາກປາກວ່າພວກເຂົາເຊື່ອໃນພຣະອົງຢ່າງໃດ? ແລະພຣະອົງແມ່ນໃຜ ຕໍ່ພວກເຂົາ?

## ແນະນຳການສອນ

### ແຜນການສອນ-ວິທີສອນນັ້ນອາດສາມາດໃຊ້ແຕກຕ່າງກັນ

16. ໃນຫ້ອງຮຽນບອກໃຫ້ສະມາຊິກຂຽນຊື່ຄົນທີ່ມີຊື່ສຽງດັງຄົນນຶ່ງໃສ່ກະດານ ຈະເປັນນັກກິລາ, ນັກຮ້ອງ, ນັກການເມືອງ, ຫລືຄົນຮັ່ງມີ. ກ່າວວ່າເວລານີ້ພວກເຮົາຈະພາກັນຫລິ້ນເກມເຣື່ອງ “ຂ້າພະເຈົ້າແມ່ນໃຜ?” ຫລັງຈາກນັ້ນແລ້ວກ່າວເພີ້ມວ່າ ວັນນີ້ພວກເຮົາຈະຮຽນຮູ້ວ່າອົງພຣະເຢຊູແມ່ນໃຜ ແລະເຮົາແມ່ນໃຜ?
17. ກ່າວວ່າ ອົງພຣະເຢຊູກັບພວກສາວົກເຮັດວຽກຢູ່ເຂດແດນກາຊາເຣັຽຟີລິບປອຍ. ບອກໃຫ້ສະມາຊິກຊອກບ່ອນນີ້ໃນແຜນທີ່. ກ່າວເພີ້ມວ່າໃນເມືອງນີ້ເຕັມໄປດ້ວຍຄວາມມືດແລະຄົນນັບຖືກຮູບ ໂຄຣົບ. ເອີ້ນໃຫ້ມີຄົນສມັກສີ່ຄົນ (1. ຜູ້ປະກາດ, 2. ອົງພຣະເຢຊູ, 3. ເປໂຕ, 4. ສາວົກ) ໃຫ້ພວກເຂົາໃຊ້ພຣະທັມ ມາຣະໂກ 8:27-30 ອອກສຽງດັງ. ຫລັງຈາກນັ້ນໃຫ້ຖາມວ່າ ເປັນຫຍັງອົງພຣະເຢຊູຈຶ່ງຕັ້ງຄຳຖາມເຣື່ອງພຣະອົງຂຶ້ນມາ? ຫລັງຈາກເປໂຕໄດ້ສາຣະພາບວ່າອົງພຣະເຢຊູຊົງເປັນພຣະເມຊີອາ.
18. ກ່າວວ່າ ອົງພຣະເຢຊູໄດ້ເອີ້ນເອົາຝູງຊົນ ແລະພວກສາວົກ ໃຫ້ເຮັດສາມຢ່າງຖ້າພວກເຂົາຕ້ອງການເປັນສາວົກຂອງພຣະອົງ.
    - ປະຕິເສດຕົນເອງ
    - ແບກໄມ້ກາງແຂນ
    - ຕິດຕາມພຣະອົງໄປ
19. ອ່ານມາຣະໂກ 8:35-9:1 ອອກສຽງດັງ. ການຕິດຕາມອົງພຣະເຢຊູໄປນັ້ນມີຄ່າສູງ, ແຕ່ມັນອາດເສັຽຄ່າແພງກວ່າ ຖ້າພວກເຮົາບໍ່ຍອມຕິດຕາມພຣະອົງໄປ.

*ສບ. ບຸນຈັນ ວົງສຸຣິດທຣ໌*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 8
# ເອົາຊະນະຄວາມບໍ່ເຊື່ອ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້**: ມາຣະໂກ 9: 14-29

**ພູມຫລັງຂອງພຣະຄັມພີ**: ມາຣະໂກ 9: 2-29

**ຈຸດສຳຄັນສຳລັບບົດຮຽນນີ້**: ການມອບຄວາມເຊື່ອໄວ້ກັບພຣະເຈົ້າຜູ້ຊົງຣິດຈະນຳໄປສູ່ແນວທາງທີ່ບໍ່ມີຂອບເຂດ.

**ຄຳຖາມເພື່ອຄົ້ນຄວ້າ**: ທ່ານຕ້ອງການພຣະເຢຊູຊ່ວຍໃຫ້ເອົາຊະນະຄວາມເຊື່ອເຣື່ອງໃດແດ່?

**ຈຸດປະສົງຂອງການສຶກສານີ້**: ເພື່ອຈະໄວ້ວາງໃຈໃນພຣະຄຣິດເວລາຂ້ອຍພົບກັບອຸປສັກທີ່ຄິດວ່າເປັນໄປບໍ່ໄດ້.

**ອ່ານລວບ**:ພວກເຮົາທຸກຄົນຄົງມີບັນຫາທີ່ຈະຮັກສາຄວາມໝັ້ນໃຈ ແລະຄວາມເຊື່ອທີ່ໝັ້ນຄົງເວລາພົບບັນຫາໃຫຍ່ໆ. ແຕ່ວ່າການມອບຊີວິດແລະຄວາມລຳບາກໄວ້ໃນພຣະຫັດຂອງພຣະເຈົ້າຈະເປີດແນວທາງແລະອຸປກອນທີ່ຂາດເຂີນ.

## ແຜນສຳລັບການສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ເອົາກະດາດແລະສໍໃຫ້ນັກຮຽນທຸກຄົນ; ໃຫ້ເຂົາເຈົ້າແຕ້ມຮູບເພື່ອສະແດງໃຫ້ເຫັນຄຳວ່າ "ຄວາມເຊື່ອ." ຫລັງຈາກນັ້ນໃຫ້ຜູ້ນຶ່ງແບ່ງປັນຮູບໃຫ້ຄົນອື່ນໆເບິ່ງ.
2. ຂຽນຄວາມໝາຍຂອງຄຳວ່າ "ຄວາມເຊື່ອ" ໃສ່ກະດານ: ໄວ້ໃຈ ແລະໝັ້ນໃຈໃນບຸກຄົນ ຫລືສິ່ງຂອງ. ໃຫ້ແຕ່ລະຄົນພິສູດເບິ່ງຮູບທີ່ໄດ້ແຕ້ມໄວ້ ຫລັງຈາກຮູ້ຄວາມໝາຍຂອງຄຳວ່າ ຄວາມເຊື່ອ. ຈາກນັ້ນໃຫ້ເວົ້າວ່າ, ເມື່ອເວົ້າເຖິງເຣື່ອງຈິດວິນຍານ, ພວກເຮົາຈະຕ້ອງຮັກສາຄວາມເຊື່ອໃນພຣະເຈົ້າໃຫ້ເຂັ້ມແຂງເພື່ອຄວາມເຊື່ອນັ້ນຈະໄດ້ນຳພາຊີວິດຂອງພວກເຮົາ. ຫລາຍເທື່ອພວກເຮົາກໍບໍ່ສາມາດຕັ້ງໝັ້ນໃນຄວາມເຊື່ອເວລາພົບກັບຄວາມລຳບາກ. ມື້ນີ້ພວກເຮົາຈະເຫັນວ່າການມີຄວາມເຊື່ອໃນພຣະເຈົ້າຜູ້ຊົງຣິດເດດຈະນຳໄປສູ່ໂອກາດທີ່ບໍ່ມີຂອບເຂດ.

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

3. ບອກວ່າເຫດການໃນບົດຮຽນນີ້ ເກີດຂຶ້ນຫລັງຈາກ ພຣະເຢຊູ, ເປໂຕ, ຢາໂກໂບ, ແລະໂຢຮັນໄດ້ກັບມາຈາກເທິງພູທີ່ພຣະເຢຊູຊົງປ່ຽນແປງພຣະກາຍ. ພວກເຂົາເຈົ້າໄດ້ພົບສາວົກຄົນອື່ນໆກຳລັງໂຕ້ຖຽງກັບພວກທັມມະຈານຢູ່.

4. ໃຫ້ນັກຮຽນຫລາຍໆຄົນອ່ານສລັບກັນ ມາຣະໂກ 9: 14-29; ໃຫ້ອ່ານແບບຫລິ້ນລະຄອນ. ຜູ້ນຶ່ງເປັນຄົນເລົ່າເຣື່ອງ, ຜູ້ນຶ່ງປັນສາວົກ, ຜູ້ນຶ່ງເປັນພຣະເຢຊູ, ຜູ້ນຶ່ງເປັນພໍ່, ຜູ້ນຶ່ງເປັນເດັກນ້ອຍ,ແລະ ຜູ້ນຶ່ງເປັນຜີຮ້າຍ.
5. ໃຊ້ຄຳຖາມຕໍ່ໄປນີ້ເພື່ອຊອກຫາຄວາມຈິງໃນພຣະຄັມພີ:
    - ທ່ານຄິດເຖິງຫຍັງແດ່ເວລາໄດ້ຍິນຄຳວ່າ ຄວາມເຊື່ອ?
    - ຜູ້ເປັນພໍ່ໄດ້ສະແດງລັກສະນະແນວໃດເວລາສົນທະນາກັບພຣະເຢຊູ?
    - ຄວາມເຊື່ອທີ່ຖືກຟື້ນຟູຂຶ້ນໃໝ່ໃນພຣະເຈົ້າຈະສາມາດເຮັດຫຍັງໄດ້ແດ່?
    - ເວລາພຣະເຢຊູຂັບໄລ່ຜີຮ້າຍອອກຈາກເດັກ, ການຕອບໂຕ້ຂອງຜີນັ້ນສະແດງໃຫ້ເຫັນແນວໃດແດ່ກ່ຽວກັບພຣະເຢຊູ?
    - ພຣະເຢຊູໝາຍເຖິງຫຍັງເວລາພຣະອົງຊົງຕອບພວກສາວົກວ່າເປັນຫຍັງພວກເຂົາຈຶ່ງບໍ່ສາມາດຂັບໄລ່ຜີຮ້າຍອອກຈາກເດັກນ້ອຍຜູ້ນັ້ນ?

## <u>ນຳພຣະທັມໄປໃຊ້ໃນຊີວິດ(ໃຊ້ເວລາ 15 ນາທີ)</u>

6. ໃຊ້ຄຳຖາມຕໍ່ໄປນີ້ເພື່ອສົນທະນາກັບນັກຮຽນ:
    - ແມ່ນຫຍັງທີ່ສຳຄັນຫລາຍສຳລັບທ່ານ?
        1) ເຊື່ອຄວາມເວົ້າທີ່ຈິງແທ້
        2) ເຊື່ອແລະວາງໃຈໃນພຣະເຈົ້າສຳລັບສິ່ງທີ່ພຣະອົງຊົງກ່າວ ແລະຊົງກະທຳໃນສິ່ງທີ່ພຣະອົງໄດ້ຊົງສັນຍາ.
    - ມີຫຍັງແດ່ໃນຊີວິດທີ່ທ່ານຂາດຄວາມເຊື່ອໃນພຣະເຈົ້າ ຫລືມີຄວາມເຊື່ອໃນພຣະເຈົ້າ?
    - ການມີພຣະຄຣິດໃນຊີວິດສຳຄັນສຳລັບຊີວິດປະຈຳວັນຂອງທ່ານບໍ່?
7. ຖາມ:ແມ່ນຫຍັງແດ່ທີ່ຊ່ວຍທ່ານໃຫ້ຕິດພັນຢູ່ກັບພຣະເຈົ້າ ຫລືຊ່ວຍທ່ານໃຫ້ໄດ້ຮັບກຳລັງຈາກພຣະອົງຕລອດວັນ? ຢາຍກະດາດ 3 ຄູນ 5 ໃຫ້ນັກຮຽນທຸກໆຄົນ. ໃຫ້ແຕ່ລະຄົນຕອບຄຳຖາມທີ່ກ່າວມາແລ້ວນັ້ນ. ປິດການສຶກສາພຣະຄຳດ້ວຍການອະທິຖານ ຂໍພຣະເຈົ້າຊົງຊ່ວຍທຸກໆຄົນໃຫ້ໄດ້ສຳຜັດການຊົງຢູ່ນຳຂອງພຣະເຈົ້າໃນທຸກກໍຣະນີຂອງຊີວິດ.

*ສຄ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 9
# ຄວາມຍິ່ງໃຫຍ່ເທົ່າທຽມກັບການເສັຽສະລະ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້**: ມາຣະໂກ 10: 32-45

**ພູມຫລັງຂອງພຣະຄັມພີ**: ມາຣະໂກ 10: 32-45

**ຈຸດສຳຄັນສຳລັບບົດຮຽນນີ້**: ພຣະເຢຊູແກ້ໄຂຄວາມເຂົ້າໃຈຜິດຂອງພວກສາວົກໂດຍປະກາດຈຸດປະສົງເຣື່ອງຄວາມຮ້ອນຮົນຂອງພຣະອົງ.

**ຄຳຖາມເພື່ອຄົ້ນຄວ້າ**: ທ່ານອະທິບາຍຄຳວ່າ "ຍິ່ງໃຫຍ່" ຢ່າງໃດ?

**ຈຸດປະສົງຂອງການສຶກສານີ້**: ເພື່ອພິຈາຣະນາຄວາມໝາຍຂອງຄຳວ່າ "ຍິ່ງໃຫຍ່" ຂອງຂ້ອຍເອງ ແລະເລືອກທີ່ຈະຕິດຕາມຕົວຢ່າງຂອງພຣະເຢຊູ.

**ອ່ານລວບ**: ຄຳຕອບຂອງພຣະເຢຊູຕໍ່ຄຳຮ້ອງຂໍຂອງຢາໂກໂບແລະໂຢຮັນເຣື່ອງຕຳແໜ່ງໃນຣາຊອານາຈັກຂອງພຣະອົງ ໄດ້ປ່ຽນແປງຄວາມໝາຍຂອງຄຳວ່າ "ຍິ່ງໃຫຍ່."

## ແຜນສຳລັບການສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)

1. ຫລັງຈາກນັກຮຽນມາເຖິງແລ້ວ, ຂໍໃຫ້ບາງຄົນອະທິບາຍຄຳວ່າ "ຍິ່ງໃຫຍ່" ແບບສັ້ນໆ ໃຫ້ຄົນອື່ນຟັງ. ບໍ່ໃຫ້ຖາມຫລືເພີ້ມເຕີມສິ່ງທີ່ເຂົາເຈົ້າເວົ້າມາ; ຫລັງຈາກຜູ້ສຸດທ້າຍເວົ້າແລ້ວ ໃຫ້ຂຽນຄຳອະທິບາຍຂອງຄຳວ່າ "ຍິ່ງໃຫຍ່" ໃສ່ກະດານ ແລ້ວຂໍນັກຮຽນໃຫ້ຕົວຢ່າງຈາກຊີວິດປະຈຳວັນ.
    - ຈາກຂອບເຂດ, ຈຳນວນ, ຫລືຄວາມຮ້ອນຮົນເກີນທັມມະດາ
    - ຈາກຄວາມສາມາດ, ຄຸນນະພາບ, ຫລືຈຸດເດັ່ນເກີນທັມມະດາ
    - ບອກເຖິງສ່ວນຂອງບາງສິ່ງທີ່ຖືວ່າສຳຄັນ ຫລືມີຄຸນຄ່າທີ່ຄວນພິຈາຣະນາ

    ເວົ້າວ່າ: ໃນໂລກທີ່ມີການແຂ່ງຂັນກັນຂອງພວກເຮົາໃນປັດຈຸບັນ, ພວກເຮົາມັກເບິ່ງຄວາມຍິ່ງໃຫຍ່ໂດຍອ້າງອີງໃສ່ຄວາມສຳເຣັດແລະຕຳແໜ່ງໃນຊີວິດ. ມື້ນີ້ພວກເຮົາຈະພິຈາຣະນາເບິ່ງຄວາມໝາຍຂອງຄຳວ່າ "ຍິ່ງໃຫຍ່" ຈາກຄຳສອນຂອງພຣະເຢຊູ ແລະຈາກຕົວຢ່າງຄວາມຍິ່ງໃຫຍ່ຂອງພຣະອົງ.

### ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)

2. ຂຽນຄຳເວົ້າຕໍ່ໄປນີ້ໃສ່ໂປສເຕີ້ໄວ້ສາມແຜ່ນ (ແຜ່ນລະຄຳ) ເພື່ອຈະຕິດໄວ້ໃຫ້ທຸກຄົນເຫັນເວລາທ່ານອະທິບາຍພຣະຄຳໃນບົດຮຽນນີ້.

- ຄວາມກ້າຫານ
- ການເຊື່ອຟັງ
- ການຮັບໃຊ້

3. ເອົາໂປສເຕີ້ "ຄວາມກ້າຫານ" ອອກມາຕິດໄວ້ກະດານ. ອ່ານມາຣະໂກ 10: 32-34. ຖາມນັກຮຽນວ່າເປັນຫຍັງຄວາມກ້າຫານຈຶ່ງສາມາດໃຊ້ເປັນຫົວຂໍ້ໄດ້ໃນພຣະຄຳຕອນນີ້. ໃຊ້ບົດຮຽນຊ່ວຍ ແລະອະທິບາຍເຣື່ອງທີ່ເກີດຂຶ້ນ ແລະຄວາມກ້າຫານທີ່ພຣະເຢຊູໄດ້ຊົງສະແດງອອກໃຫ້ເຫັນໃນຂະນະທີ່ຊົງເດີນທາງໄປນະຄອນເຢຣູຊາເລັມໃນຄັ້ງສຸດທ້າຍຂອງພຣະອົງ. ເບິ່ງລາຍລະອຽດເຣື່ອງການຕາຍແລະການເປັນຄືນມາ. ເວົ້າວ່າ: ແທນທີ່ຈະໜີຈາກສິ່ງທີ່ຈະເກີດຂຶ້ນ, ພຣະເຢຊູກ້າວໜ້າໄປດ້ວຍຄວາມໝັ້ນໃຈ. ພຣະອົງຊົງສະແດງຄວາມກ້າຫານທີ່ຍິ່ງໃຫຍ່.
4. ເອົາໂປສເຕີ້ "ການເຊື່ອຟັງ" ອອກມາຕິດໄວ້ກະດານ. ຖາມ: ທ່ານຄິດວ່າພຣະເຢຊູຊົງແປກໃຈບໍ່ທີ່ຢາໂກໂບແລະໂຢຮັນຮ້ອງຂໍຕຳແໜ່ງໃນຣາຊອານາຈັກຂອງພຣະອົງທີ່ຈະມາເຖິງ? ອ່ານ ມາຣະໂກ 10: 35-40 ຊີ້ໃຫ້ນັກຮຽນເຫັນເຣື່ອງຄວາມທະເຍີທະຍານຂອງສອງອ້າຍນ້ອງໃນຄຳຂໍ. ຖາມ: ແມ່ນຫຍັງເຮັດໃຫ້ຢາໂກໂບແລະໂຢຮັນເຂົ້າໃຈຜິດເຣື່ອງພຣະປະສົງຂອງພຣະເຢຊູ ເມື່ອພວກເຂົາຮ້ອງຂໍຕຳແໜ່ງທີ່ໃຫຍ່ສູງສຸດ? ເນັ້ນໃນສິ່ງທີ່ຢາໂກໂບແລະໂຢຮັນຈະຕ້ອງໄດ້ພົບ ກ່ອນທີ່ຈະໄດ້ມີຄວາມຍິນດີໃນຣາຊອານາຈັກຂອງພຣະເຈົ້າ. ເວົ້າວ່າ: ຄວາມຍິ່ງໃຫຍ່ທີ່ແທ້ຈະພົບຢູ່ທີ່ການເຊື່ອຟັງພຣະເຈົ້າຕາມແບບຢ່າງຂອງພຣະເຢຊູ.
5. ເອົາໂປສເຕີ້ "ການຮັບໃຊ້" ອອກມາຕິດໄວ້ກະດານ. ເວົ້າວ່າ: ການຮ້ອງຂໍຂອງຢາໂກໂບແລະໂຢຮັນໄດ້ສ້າງຄວາມສົນໃຈໃຫ້ກັບສາວົກຄົນອື່ນໆ. ພຣະເຢຊູຊົງຖືໂອກາດນັ້ນເພື່ອແກ້ຄວາມເຂົ້າໃຈຜິດຂອງພວກເຂົາ. ອ່ານ ມາຣະໂກ 10: 41-45. ຖາມ: ແມ່ນຫຍັງຄືຄວາມແຕກຕ່າງກ່ຽວກັບຄວາມຍິ່ງໃຫຍ່ຂອງຜູ້ນຳຄົນຕ່າງຊາດ ແລະຄວາມຍິ່ງໃຫຍ່ຂອງຜູ້ຕິດຕາມພຣະເຢຊູ? ເວົ້າວ່າ: ຄວາມບໍ່ເຫັນແກ່ຕົວ ແລະການຮັບໃຊ້ແບບເສັຽສະລະເປັນຫົວໃຈສຳຄັນຂອງຄວາມຍິ່ງໃຫຍ່ສຳລັບພຣະເຢຊູ.

## <u>ນຳພຣະທັມໄປໃຊ້ໃນຊີວິດ(ໃຊ້ເວລາ 15 ນາທີ)</u>

6. ຖາມ: ມີຫຍັງໃນຊີວິດທີ່ທ່ານຢາກໃຫ້ຄົນທັງຫລາຍຈົດຈຳວ່າເປັນຄວາມຍິ່ງໃຫຍ່ຂອງທ່ານ? ຊີ້ໃສ່ໂປສເຕີ້ທັງສາມແຜ່ນ(ຄວາມກ້າຫານ, ການເຊື່ອຟັງ, ການຮັບໃຊ້) ແລະເຊີນນັກຮຽນໃຫ້ສຳຣວດວ່າແມ່ນຫຍັງທີ່ຍາກສຳລັບເຂົາເຈົ້າ ແຕ່ລະຢ່າງເປັນປັດຈັຍສຳຄັນໃນການທີ່ຈະເປັນຜູ້ຍິ່ງໃຫຍ່ຕາມຄຳອະທິບາຍຂອງພຣະເຢຊູໃນພຣະຄຳມື້ນີ້.
7. ຊັກຊວນໃຫ້ນັກຮຽນທຸກຄົນວາງແຜນທີ່ຈະນຳຄວາມກ້າຫານ, ການເຊື່ອຟັງ, ແລະການຮັບໃຊ້ເຂົ້າປະກອບສ່ວນໃນຊີວິດປະຈຳວັນ. ອະທິຖານໃຫ້ທຸກຄົນເຮັດແຕ່ສິ່ງຈະນຳພຣະກຽດມາໃຫ້ພຣະເຈົ້າບໍ່ວ່າຈະເປັນຄຸນຄ່າ, ລະດັບຄວາມສຳຄັນແລະວິທີທີ່ເຂົາເຈົ້າເຮັດກັບຄົນອື່ນໆ ໂດຍເຫັນວ່າຄົນອື່ນມີຄຸນຄ່າກວ່າພວກຕົນ.

*ສຄ*

# ຄຳແນະນຳສຳລັບຄຣູສອນ

# ບົດຮຽນທີ 10

# <u>ສັນຍາລັກຂອງການພິພາກສາ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້</u>**: ມາຣະໂກ 11: 12-33

**<u>ພູມຫລັງຂອງພຣະຄັມພີ</u>**: ມາຣະໂກ 11

**<u>ຈຸດສຳຄັນສຳລັບບົດຮຽນນີ້</u>**: ພຣະເຢຊູຊົງສາບແຊ່ງຕົ້ນເດື່ອແລະຊຳຣະພຣະວິຫານ, ເປັນສັນຍາລັກຂອງການພິພາກສາອິສຣາເອນ.

**<u>ຄຳຖາມເພື່ອຄົ້ນຄວ້າ</u>**: ຊີວິດແລະຈິດວິນຍານຂອງຂ້າພະເຈົ້າແລະຂອງຄຣິສຕະຈັກເປັນຢ່າງໃດ?

**<u>ຈຸດປະສົງຂອງການສຶກສານີ້</u>**: ເພື່ອຈະປະເມີນຜົນຝ່າຍຈິດວິນຍານຂອງຂ້າພະເຈົ້າ ແລະຂອງຄຣິສຕະຈັກ.

**<u>ອ່ານລວບ</u>**: ພຣະເຈົ້າມີພຣະປະສົງທີ່ຈະເຫັນໝາກຜົນໃນຊີວິດຂອງປະຊາກອນຂອງພຣະອົງ. ພຣະເຢຊູຊົງສາບແຊ່ງຕົ້ນເດື່ອເທດ ແລະຊຳຣະພຣະວິຫານ, ນີ້ເປັນສັນຍາລັກຂອງການຕັດສິນລົງໂທດຂອງພຣະເຈົ້າຕໍ່ການບໍ່ເກີດຜົນຂອງອິສຣາເອນ.

## <u>ແຜນສຳລັບການສອນ</u>

### <u>ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)</u>

1. ເລີ້ມຕົ້ນຫ້ອງຮຽນໂດຍຂໍໃຫ້ນັກຮຽນແບ່ງປັນກ່ຽວກັບປະສົບການສ່ວນຕົວ ເຣື່ອງເຮັດສວນທີ່ບໍ່ເກີດຜົນ (ດອກໄມ້, ຜັກ, ແລະຕົ້ນໝາກໄມ້).ເລີ້ມສົນທະນາກ່ຽວກັບສິ່ງທີ່ລາວໄດ້ປະສົບການມາ; ແມ່ນແຕ່ຜູ້ທີ່ເປັນຄຣູສອນເຮັດສວນຄືວບາງຄັ້ງກໍຍັງພາດ ຫລັງຈາກຫລາຍຄົນໄດ້ເວົ້າຫລືອະທິບາຍລວມກັນແລ້ວ, ເວົ້າວ່າ: ມື້ນີ້ພວກເຮົາຈະພາກັນຍ່າງໄປກັບພຣະເຢຊູຫລັງຈາກພຣະອົງໄດ້ເຂົ້າໄປກຸງເຢຣູຊາເລັມ. ພວກເຮົາຈະສຶກສາສອງປະເດັນທີ່ຈະສອນພວກເຮົາກ່ຽວກັບໝາກຜົນຝ່າຍຈິດວິນຍານ.

### <u>ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)</u>

2. ໃຫ້ເນື້ອຫາຂອງພຣະຄຳໃນມື້ນີ້. ເວົ້າວ່າ: ພຣະເຢຊູໄດ້ໄປເຂດພຣະວິຫານວັນອາທິດຫລັງຈາກທີ່ພຣະອົງໄດ້ເຂົ້າໄປກຸງເຢຣູຊາເລັມຢ່າງມີຊັຍ ແລະສັງເກດເບິ່ງກິຈການຕ່າງໆໃນທີ່ນັ້ນ (ມຣກ 11: 11). ເມື່ອຄ່ຳຫລາຍແລ້ວພຣະອົງຈຶ່ງໄດ້ກັບໄປຍັງບ້ານເບັດທານີ. ຕອນເຊົ້າວັນຈັນ, ພຣະເຢຊູກັບພວກສາວົກອອກຈາກບ້ານເບັດທານີກັບໄປຍັງກຸງເຢຣູຊາເລັມ.

3. ອ່ານ ມາຣະໂກ 11:12-14. ໃຊ້ບົດຮຽນໃນຫົວຂໍ້ "ພຣະເຢຊູຊົງຊອກຫາໝາກໄມ້" ເພື່ອອະທິບາຍຈຸດສຳຄັນສາມຢ່າງກ່ຽວກັບເຣື່ອງພຣະເຢຊູໄດ້ຊົງສາບແຊ່ງຕົ້ນເດື່ອເທດ.
    - ພຣະເຢຊູຊົງຕ້ອງການໃຫ້ຜູ້ຕິດຕາມພຣະອົງມີໝາກຜົນຝ່າຍຈິດວິນຍານໃນຊີວິດ ແລະ ຮວມທັງກິຈການທາງສາສນາດ້ວຍ.
    - ຕົ້ນໝາກເດື່ອເທດນັ້ນເປັນຕົວແທນສຳລັບໄພ່ພົນຂອງພຣະເຈົ້າ.
    - ພຣະເຢຊູຕ້ອງການໃຫ້ໄພ່ພົນຂອງພຣະອົງເກີດຜົນຝ່າຍຈິດວິນຍານຕໍ່ໄປ.
4. ເວົ້າວ່າ: ປະສົບການຂອງພຣະເຢຊູກັບຕົ້ນເດື່ອເທດເປັນເຫດການທີ່ບອກເຖິງສິ່ງຈະເກີດຂຶ້ນ. ອ່ານ ມາຣະໂກ 11:15-19. ໃຫ້ນັກຮຽນຕອບວ່າເຫດການສອງຢ່າງຕໍ່ໄປນີ້ກ່ຽວພັນກັນແນວໃດ: ວິຫານນັ້ນມີຜູ້ຄົນຫລວງຫລາຍແລະມີກິຈການຕ່າງໆ (ຕົ້ນໄມ້ມີໃບຫລາຍ), ແຕ່ປາກົດວ່າຄົນເຫລົ່ານັ້ນບໍ່ໄດ້ເຮັດໃນສິ່ງທີ່ພຣະເຈົ້າຕ້ອງການ (ຂາດໝາກຜົນຝ່າຍວິນຍານ). ໃຫ້ເນັ້ນວ່າ, ພຣະເຢຊູຊົງອະທິບາຍເຖິງຈຸດປະສົງຂອງພຣະວິຫານ. ໃນທີ່ສຸດໃຫ້ບອກວ່າພຣະເຢຊູແລະພວກສາວົກໄດ້ພາກັນກັບຄືນໄປບ້ານເບັດທານີໃນຕອນຄ່ຳ.
5. ວັນອັງຄານຕໍ່ມາພຣະເຢຊູແລະພວກສາວົກໄດ້ກັບຄືນໄປກຸງເຢຣູຊາເລັມ. ຕອນກັບໄປນັ້ນ, ພວກສາວົກເຫັນວ່າຕົ້ນເດື່ອເທດໄດ້ຫ່ຽວແຫ້ງລົງ. ອ່ານມາຣະໂກ 11: 20-26. ອະທິບາຍຄຳຕອບຂອງພຣະເຢຊູຕໍ່ຄຳເວົ້າຂອງເປໂຕ (ພຣະເຢຊູຊົງບອກພວກສາວົກວ່າຄວາມລອດພົ້ນແລະຄວາມເຊື່ອນັ້ນຈະຕ້ອງເລີ້ມທີ່ພຣະເຈົ້າ ບໍ່ແມ່ນຢູ່ໃນພຣະວິຫານຫລືໂບດ).
6. ເວົ້າວ່າ:ໃນກຸງເຢຣູຊາເລັມ ພຣະເຢຊູໄດ້ປະເຊີນໜ້າກັບພວກຜູ້ນຳສາສນາ. ອ່ານມາຣະໂກ 11:27-33. ອະທິບາຍຄຳຕອບຂອງພຣະເຢຊູຕໍ່ພວກຜູ້ນຳສາສນາ ແລະອະທິບາຍຄຳປາສັຍຂອງພວກເຂົາຕໍ່ຄຳສອບຖາມຂອງພຣະອົງ. ເນັ້ນເຖິງຄຳຕອບທີ່ບິ້ມບວນຂອງພວກເຂົາ ແລະຄຳຕອບຄຳສຸດທ້າຍຂອງພຣະເຢຊູ.

## <u>ນຳພຣະທັມໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

7. ຄຳຖາມເພື່ອພິຈາຣະນາສ່ວນຕົວ: ຂ້ອຍໄດ້ໃຊ້ຊີວິດສົມກັບເປັນບຸກຄົນທີ່ຮູ້ວ່າພຣະເຈົ້າຊົງຕ້ອງການໃຫ້ໄປເກີດຜົນຝ່າຍຈິດວິນຍານບໍ່ ແລະຂ້ອຍໄດ້ສະແດງຄວາມເປັນຈິງ, ຊີວິດ, ແລະຄຸນຄ່າຂອງພຣະເຈົ້າຕໍ່ຄົນທີ່ຂ້ອຍໄດ້ພົບພໍ້ບໍ່?
8. ຄຳຖາມເພື່ອສົນທະນາໃນກຸ່ມ: ໂບດຂອງພວກເຮົາມີຄຸນຄ່າ, ມີອຸປນິສັຍ, ແລະມີຄວາມສຳພັນເໝືອນກັບຄົນທັງຫລາຍທີ່ຢູ່ໃນສະມາຄົມແລະກຸ່ມຕ່າງໆໃນປັດຈຸບັນບໍ່?
9. ອະທິຖານປິດ. ຂອບຄຸນພຣະເຈົ້າທີ່ຊົງໃຫ້ຜູ້ຕິດຕາມພຣະອົງໄດ້ມີສ່ວນໃນວຽກງານ. ໜູນໃຈນັກຮຽນໃຫ້ຕັ້ງໃຈທີ່ຈະໄປເກີດຜົນເພື່ອພຣະເຈົ້າ ຜ່ານຄຣິສຕະຈັກຂອງພຣະອົງ.

*ສຄ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 11
# <u>ຊີງທຳນວາຍ, ຄຳສັນຍາ, ຂໍ້ອວດ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ມາຣະໂກ 14: 12-31

**<u>ພູມຫລັງຂອງພຣະຄັມພີ:</u>** ມາຣະໂກ 14: 1-31

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ໃຫ້ເຂົ້າໃຈເຖີງຄຳສັນຍາໃໝ່, ສາວົກບໍ່ໄດ້ເຮັດຕາມ.

**<u>ຄຳຖາມເພື່ອການຄົ້ນຄວ້າ:</u>** ເຮົາຈະເຮັດແນວໃດເພື່ອເຮົາຈະບໍ່ມີຈິດວິນຍານຈອງຫອງບໍ່ເຮັດຕາມ?

**<u>ຈຸດປະສົງຂອງບົດຮຽນ:</u>** ເພື່ອເຮົາຈະຮຽນຮູ້ເຣື່ອງ ຈະບໍ່ມີຈິດວິນາຍານຈອງຫອງ.

## <u>ບົດນຳ</u>

ຢ່າເຂົ້າໃຈຜິດວ່າບົດສອນນີ້ເພີ້ມຈະໃຫ້ບົດຮຽນຍາວ, ບົດສອນນີ້ຈະຊ່ອຍທ່ານເຮັດໃຫ້ບົດຮຽນສັ້ນລົງ ແລະມີນ້ຳໜັກໃນການເນັ້ນໜັກແຕ່ລະຈຸດ ດັ່ງທີ່ຈະເຫັນຕໍ່ໄປນີ້.

### **<u>ຮັກແລະການທໍຣະຍົດ</u>** (ມາຣະໂກ 14:1-10).

1. ເລົ່າເຖີງ ສອງມື້ກ່ອນໜ້າຈະເຖີງວັນປັສຄາກິນເຂົ້າຈີ່ບໍ່ມີເຊື້ອແປ້ງຟູນັ້ນ. ມີພວກປະໂຣຫິດຕົ້ນໃຫຍ່ແລະພວກນັກທັມຊອກຫາທາງຈັບພຣະເຢຊູໄປປະຫານ. ແປວ່າ ວັນອັງຄານ ເພາະວ່າພຣະເຢຊູຕັ້ງພິທີສິນມະຫາສນິດໃນແລງວັນພຣະຫັດ ຊຶ່ງເປັນແລງວັນດຽວກັນກັບກິນເຂົ້າຈີ່ບໍ່ມີເຊື້ອແປ້ງ.

2. ໃນຂະທີ່ພຣະເຢຊູຮັບທານອາຫານແລງ ໄດ້ມີຍິງຜູ້ນຶ່ງໄດ້ເອົານ້ຳມັນຫອມຣາຄາແພງມາທົດສົງພຣະເຢຊູ (ຂໍ້ 3). ຊຶ່ງເປັນການສະແດງຄວາມນັບຖືຢ່າງສູງ ແຕ່ສາວົກບໍ່ເຂົ້າໃຈ ຈຶ່ງຄຶດເສັຽດາຍນ້ຳຫອມ

3. ສາວົກທີ່ມີຊື່ວ່າຢູດາຖືກມານເຂົ້າ ຈຶ່ງລັກອອກໄປຫາພວກປະໂຣຫິດຕົ້ນໃຫຍ່ເພື່ອຂາຍຄວາມລັບໃຫ້ເຂົາຈັບພຣະເຢຊູ (ຂໍ້ 10).

### **<u>ພົ້ນດ້ວຍພຣະໂລຫິດ</u>** (ມາຣະໂກ 14: 12).

1. ງານກິນເຂົ້າຈີ່ບໍ່ມີເຊື້ອແປ້ງມີຄວາມເປັນມາດັ່ງນີ້.

    ກ. ອ່ານ ອົບພະຍົບ 12:31-34.

ຂ. ອ່ານ ອົບພະຍົບ 13:7-10

2. ການກິນເຂົ້າຈີ່ບໍ່ມີເຊື້ອແປ້ງແມ່ນການຈາຣຶກເຖິງພຣະຄຸນພຣະເຈົ້າທີ່ໄດ້ປົດປ່ອຍເຂົາຈາກການເປັນຂ້າທາດທີ່ປະເທດເອຢິບ, ທຸກປີທີ່ກິນກໍແມ່ນເຕືອນສະຕິເຂົາບໍ່ໃຫ້ລືມຕົວວ່າເຂົາເປັນໃຜມາຈາກໃສ? ໃຜໄດ້ຊ່ອຍເຂົາໃຫ້ພົ້ນ?

**<u>ການຈັດຕຽມ ແລະການທຳນວາຍ</u>** (ມາຣະໂກ 14:13-21).

1. ພຣະເຢຊູໄດ້ໃຫ້ສາວົກສອງຄົນໃຫ້ຈັດຕຽມສິນປັສຄາເຫັນຢ່າງແຈ້ງດັ່ງນີ້; 1. ເມື່ອເຂົ້າໄປໃນກຸງຈະພົບຊາຍຄົນນຶ່ງຖືໝໍ້ນ້ຳ ແລ້ວໃຫ້ຕາມຊາຍນັ້ນໄປ (ຂໍ້ 13). 2. ເມື່ອໄປຮອດເຮືອນໃຫ້ຖາມວ່າ ຫ້ອງຮັບແຂກສຳລັບເຮົາທີ່ເຮົາຈະກິນປັສຄາກັບພວກສາວົກຂອງເຮົາໄດ້ນັ້ນຢູ່ທີ່ໃດ? (ຂໍ້ 14). 3. ເຈົ້າຂອງເຮືອນຈະບອກທ່ານວ່າຫ້ອງຊັ້ນເທິງ (ຂໍ້ 15). ສາວົກເຮັດຕາມທຸກປະການ, ເຮົາຄວນຮຽນເອົາແບບຢ່າງນີ້.

2. ຂໍ້ 18 ຊົງທຳນວາຍວ່າຈະມີຜູ້ນຶ່ງທໍຣະຍົດ, ຜູ້ນັ້ນແມ່ນຜູ້ທີ່ຈ້ຳຖ້ວຍດຽວກັນກັບພຣະອົງ.
3. ຂໍ້ 21ກ ພຣະເຢຊູຈະປະຕິບັດຕາມທີ່ຂຽນໄວ້ໃນພຣະຄັມພີ.
4. ຂໍ້ 21ຂ ຊົງກ່າວວ່າຜູ້ທີ່ທໍຣະຍົດບໍ່ເກີດມາກໍດີກວ່າ ອາດຈະມີຄວາມໝາຍວ່າ ບໍ່ມີລາວກໍບໍ່ມີຜູ້ທໍຣະຍົດ, ຫລືອາດຈະມີຄວາມໝາຍວ່າຄົນທີ່ເຊື່ອພຣະອົງແລ້ວທໍຣະຍົດພຣະອົງກໍຈະວິບັດເໝືອນກັນ.

**<u>ຊົງຕັ້ງສິນມະຫາສນິດ</u>** (ມາຣະໂກ 14:22-26)

1. ສິນມະສນິດແມ່ນກິນໃນແລງວັນພຣະຫັດ ສິນນີ້ລາງເທື່ອເຮົາຮ້ອງວ່າ ສິນລະນຶກ ເພາະເປັນການລະນຶກເຖິງພຣະຄຸນພຣະເຢຊູ.

2. ເຂົ້າຈີ່ບໍ່ມີເຊື້ອແປ້ງ ແມ່ນເຂົ້າຈີ່ແທ້ທີ່ບໍ່ມີແປ້ງຟູ ມີຄວາມໝາຍເຖິງຮ່າງກາຍແທ້ຂອງພຣະອົງທີ່ຖືກເຂົາແທງ, ແລະນ້ຳອະງຸ່ນໝາຍເຖິງພຣະໂລຫິດ (ເລືອດ) ຂອງພຣະອົງທີ່ໄຫລອອກໃນຂະນະທີ່ເຂົາແທງຂ້າງ ແລະເລືອດນີ້ເອງໄດ້ຊຳຣະລ້າງຄວາມຜິດບາບຂອງທຸກຄົນທີ່ເຊື່ອໃນພຣະເຢຊູ.

**<u>ສັນຍາແບບຂີ້ອວດ</u>** (ມາຣະໂກ 14:27-31)

1. ຂໍ້ 27 ພຣະເຢຊູບອກສາວົກວ່າເມື່ອເວລາເຂົາຈັບພຣະອົງໄປນັ້ນພວກສາວົກທຸກຄົນຈະພາກັນຢ້ານແລະຕົກໃຈຈົນແຕກກະຈາຍກັນໄປ.

2. ຂໍ້ 29 ສາວົກເປໂຕ ກ່າວໂອ້ອວດໃຫ້ຄຳໝັ້ນສັນຍາວ່າ ຜູ້ອື່ນຈະຕື່ນສະດຸດໃຈກໍຕາມລາວຈະບໍ່ຕື່ນສະດຸດໃຈ
3. ຂໍ້ 30 ພຣະເຢຊູຊົງບອກລາວວ່າ ເຈົ້າຈະປະຕິເສດ ເຖິງສາມເທື່ອ.

*ຫວ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 12
# <u>ທໍຣະຍົດ, ຖືກຈັບ, ຂຶ້ນສານ</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ມາຣະໂກ 14: 32-52; 15:1-15

**<u>ພູມຫລັງຂອງພຣະຄັມພີ:</u>** ມາຣະໂກ 14: 43-72; 15:1-15

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ຊົງອົດທົນຕໍ່ຜູ້ທໍຣະຍົດ ແລ້ວຖືກຈັບ ເມື່ອຂຶ້ນສານກໍຊົງຖ່ອມຕົວ.

**<u>ຄຳຖາມເພື່ອການຄົ້ນຄວ້າ:</u>** ເມື່ອຖືກຂົ່ມເຫງ ເຮົາຈະຮຽນແບບພຣະເຢຊູແນວໃດ?

**<u>ຈຸດປະສົງຂອງບົດຮຽນ:</u>** ເພື່ອເຮົາຈະຮູ້ຈັກເຮັດເມື່ອຖືກຂົ່ມເຫງດ້ວຍການຖ່ອມຕົວ.

## <u>ບົດນຳ</u>

ພຣະເຢຊູຖືກເຂົາຈັບຍ້ອນຢູດາຜູ້ເປັນສາວົກຂອງພຣະອົງເອງ, ແລະພຣະອົງຖືກປະຕິເສດຈາກເປໂຕຜູ້ທີ່ບອກວ່າຮັກພຣະອົງ ແລະເວົ້າວ່າຈະບໍ່ປະຖິ້ມພຣະອົງ. ຫວັງໃຈວ່າເຮົາຈະຮຽນຈາກຊີວິດຂອງຢູດາ ແລະ ເປໂຕ ແລະຮຽນເປັນຜູ້ບໍ່ຕໍ່ສູ້ເໝືອນພຣະເຢຊູບໍ່ຕໍ່ສູ້ ແລະບໍ່ໂກດເຄືອງຢູດາ ແລະເປໂຕເລີຍ.

**<u>ຈູບທໍຣະຍົດ</u>** (ມາຣະໂກ 14:32-52)

1. ໃນແລງວັນພຣະຫັດ ຫລັງຈາກຕັ້ງສິນມະຫາສນິດແລ້ວ ພຣະເຢຊູໄດ້ນຳພວກສາວົກໄປຍັງສວນເຄັດເຊມາເນ ຈຸດປະສົງເພື່ອໄຫວ້ວອນ, ທີ່ສວນນັ້ນພຣະອົງຊົງເປີດເຜີຍຄວາມໃນໃຈຂອງພຣະອົງວ່າ “*ຈິດໃຈຂອງເຮົາກໍທຸກໜັກແທບຈະຕາຍຢູ່ແລ້ວ ຈົ່ງຄອຍເຝົ້າຢູ່ທີ່ນີ້ເທີ້ນ* ” (ຂໍ້ 34).

2. ພຣະເຢຊູໄດ້ໄປໄຫວ້ວອນຢູ່ຕ່າງຫາກ ແລ້ວກັບມາຫາພວກສາວົກຕັ້ງສາມເທື່ອ ແລະກໍເຫັນເຂົາບໍ່ເອົາໃຈໃສ່ໄຫວ້ວອນ ກັບນອນຫລັບຢູ່. ຄັ້ງທີສາມນີ້ ພຣະອົງຊົງກ່າວກັບເຂົາວ່າ *“ພວກທ່ານຍັງນອນຫລັບເຊົາເມື່ອຍຢູ່ຫລື ພໍເທາະ ເວລາມາເຖິງແລ້ວ ເບິ່ງແມ, ບຸດມະນຸດກຳລັງຈະຖືກມອບໄວ້ໃນມືຂອງຄົນບາບ ຈົ່ງລຸກຂຶ້ນພາກັນໄປເທາະ ເບິ່ງແມ, ຜູ້ທີ່ມອບເຮົານັ້ນມາໃກ້ແລ້ວ* " (ຂໍ້ 41-42).

3. ເຣື່ອງເຝົ້າຣະວັງຢູ່ນີ້ພຣະອົງໄດ້ເຕືອນເຂົາໄວ້ແລ້ວໃນ ໂຢຮັນ 13: 32-37 ແລະກໍເຕືອນເຂົາໃນຂະນະທີ່ພຣະອົງຊົງເປັນທຸກໃຈ ໃຫ້ຄອຍເຝົ້າຣະວັງໃນຂໍ້ 34 ອີກຄັ້ງນຶ່ງ.

4. *ເມື່ອພຣະອົງຍັງຊົງກ່າວບໍ່ທັນຂາດຄຳ* " (ຂໍ້ 43ກ). ຢູດາໄດ້ໃຫ້ສັນຍານເຂົາໃຫ້ຈັບພຣະເຢຊູດ້ວຍການຈູບຕາມທຳນຽມຂອງຊາວຢິວໂດຍກ່າວວ່າ “*ເຮົາຈະຈູບຄຳນັບຜູ້ໃດ ກໍແມ່ນຜູ້ນັ້ນແຫລະ, ຈົ່ງຈັບ*

*ກຸມເອົາໄປຮັກສາໄວ້ໃຫ້ດີ* " (ຂໍ້ 44ຂ). ເມື່ອນັ້ນເຂົາກໍເຂົ້າຈັບກຸມພຣະເຢຊູທັນທີ.

**<u>ການຂຶ້ນສານ ແລະການປະຕິເສດ</u>** (ມາຣະໂກ 14:53-72)

1. ຫລັງຈາກຈັບພຣະອົງແລ້ວ ເຂົາໄດ້ຄຸມພຣະເຢຊູໄປຫາມະຫາປະໂຣຫິດ ກ່ອນຈະນຳພຣະອົງໄປຂຶ້ນສານແຊນຮີດຣິນ ( Sanhidrin) ຊຶ່ງເປັນສານສູງສຸດຂອງໂຣມັນທີ່ປົກຄອງຊາດຢິວ. ເປໂຕຜູ້ເປັນສາວົກຂອງພຣະເຢຊູກໍຈອບຍ່າງຕິດຕາມເຂົາໄປຫ່າງໆ ເພາະລາວຢ້ານ (ຂໍ້ 54).

2. ເຂົາຖາມພຣະອົງວ່າ "*ເຈົ້າເປັນພຣະຄຣິດພຣະບຸດຂອງພຣະເຈົ້າຜູ້ຊົງຄວາມສຸກຫລື*"ພຣະເຢຊູຊົງຕອບວ່າ, "*ເຮົາເປັນຜູ້ນັ້ນແຫລະ, ແລະພວກທ່ານຈະໄດ້ເຫັນບຸດມະນຸດນັ່ງຢູ່ເບື້ອງຂວາຂອງຜູ້ຊົງຣິດທານຸພາບ ແລະກຳລັງສະເດັດມາໃນເມກແຫ່ງຟ້າສວັນ*" (ຂໍ້ 60-61). ຄຳຕອບນີ້ເຂົາຖືວ່າເປັນຄຳເວົ້າໝິ່ນປະໝາດພຣະເຈົ້າ, ດ້ວຍເຫດນີ້ມະຫາປະໂຣຫິດຈຶ່ງໃຈຮ້າຍຈົນຈີກເສື້ອຂອງຕົນ ເພື່ອສະແດງຄວາມໃຈຮ້າຍຢ່າງສຸດຂີດ ຈົນເວົ້າວ່າ " *ພວກເຮົາຍັງຕ້ອງການພະຍານອັນໃດອີກ* " (ຂໍ້ 63). ແປວ່າເອົາໄປປະຫານເລີຍ.

3. ໃນຖ້າມກາງການກົດດັນທີ່ພຣະເຢຊູໄດ້ຮັບຈາກພວກເຂົາຍັງບໍ່ພໍ ເປໂຕຜູ້ເປັນສາວົກກໍປະຕິເສດວ່າບໍ່ຮູ້ຈັກພຣະອົງເຖິງສາມເທື່ອ (ອ່ານຈາກ ຂໍ້ 68-72).

**<u>ໄຕ່ສວນຄວາມ ແລະລົງໂທດ</u>** (ມາຣະໂກ 15:1-15)

1. ວັນຕໍ່ມາພວກປະໂຣຫິດຕົນໃຫຍ່, ພວກເຖົ້າແກ່, ພວກນັກທັມ ແລະພວກສະມາຊິກສະພາໄດ້ມັດພຣະເຢຊູໄປຫາປີລາດ, ບອກປີລາດວ່າພຣະເຢຊູຕັ້ງຕົນເອງເປັນກະສັດ ຊຶ່ງຂັດກັບກະສັດທີ່ມີຢູ່ແລ້ວ ຫລື ເປັນຂະບວນການຊີງອຳນາດ. ດັ່ງນັ້ນ ປີລາດຖາມພຣະເຢຊູວ່າ "*ເຈົ້າເປັນກະສັດຂອງຊາດຢິວຫລື*" *ພຣະອົງຊົງຕອບວ່າ, "ທ່ານເວົ້ານັ້ນຖືກຕ້ອງແລ້ວ*" (ຂໍ້ 2). ພຣະເຢຊູຊົງຕອບຄຳຖາມ ທີ່ປີລາດຈັບຜິດບໍ່ໄດ້, ເມື່ອເປັນເຊັ່ນນັ້ນປີລາດຈຶ່ງຄິດຢາກປ່ອຍພຣະເຢຊູ.

2. ເນື່ອງຈາກເທສການຂອງຊາດຢິວປີລາດຈຶ່ງເອົາໂຈນຮ້າຍຜູ້ນຶ່ງມີຊື່ວ່າ ບາຣາບາ ອອກມາຢືນຢູ່ໃກ້ຄຽງພຣະເຢຊູ ແລ້ວປີລາດຖາມເຂົາວ່າ "*ເຈົ້າທັງຫລາຍຢາກໃຫ້ເຮົາປ່ອຍກະສັດຂອງຊາດຢິວໃຫ້ພວກເຈົ້າຫລື* " (ຂໍ້ 9). ເປັນຄຳຖາມທີ່ຢາກຊ່ອຍພຣະເຢຊູ, ແຕ່ໜ້າເສັຽດາຍ ພຣະເຢຊູບໍ່ຕ້ອງການຜູ້ມີອຳນາດໃດໆ ມາຊ່ອຍພຣະອົງ.

3. ເມື່ອເຂົາຍັງຮ້ອງດ້ວຍສຽງດັງປີລາດຈຶ່ງຖາມເຂົາອີກວ່າ"*ຖ້າຢ່າງນັ້ນຢາກໃຫ້ເຮົາເຮັດຢ່າງໃດແກ່ຜູ້ທີ່ພວກເຈົ້າເອີ້ນວ່າກະສັດຂອງຊາດຢິວ "ເຂົາຮ້ອງຂຶ້ນອີກວ່າ, "ຄຶງມັນໄວ້ທີ່ໄມ້ກາງແຂນ* " (ຂໍ້ 13).

*ຫວ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 13
# ສິ້ນພຣະຊົນ ແລະຄືນພຣະຊົນ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ມາຣະໂກ 15:33-41; 16: 1-8

**ພູມຫລັງຂອງພຣະຄັມພີ:** ມາຣະໂກ 15:21-45; 16:1-8

**ຈຸດສຳຄັນຂອງບົດຮຽນນີ້:** ການຕາຍແລະການຄືນພຣະຊົນເປັນທີ່ນທາງໃຫ້ເຮົາຮັບຄວາມລອດພົ້ນ.

**ຄຳຖາມເພື່ອການຄົ້ນຄວ້າ:** ຂ້າພະເຈົ້າໄດ້ເຊື່ອແນວນັ້ນບໍ່? ການຕາຍແລະການຄືນຂອງພຣະອົງໄດ້ກະຕຸ້ນຈິດໃຈໃຫ້ຂ້າພະເຈົ້າມີຊີວິດເພື່ອພຣະອົງແນວໃດ?

**ຈຸດປະສົງຂອງບົດຮຽນ:** ເພື່ອໃຫ້ເຮົາມີຄວາມເຊື່ອແລະມີຊີວິດຢູ່ເພື່ອພຣະອົງ.

## ບົດນຳ

ມີຄຣູສອນລາງຄົນເຂົ້າໃຈຜິດວ່າບົດສອນເຮັດໃຫ້ບົດຮຽນຍາວຂຶ້ນຊື່ໆ ຄວາມຈິງແລ້ວບົດສອນຈະຊ່ອຍໃຫ້ສັ້ນລົງ ແລະມີຄວາມໝາຍຫລາຍກວ່າຫາກທ່ານເລືອກຈະເນັ້ນໜັກຕາມຄຳແນະນຳຂ້າງລ່າງນີ້.

**ຖືກຄຶງທີ່ໄມ້ກາງແຂນ** (ມາຣະໂກ 15:21-32)

1. ບອກນັກຮຽນວ່າ ພຣະເຢຊູຖືກສົ່ງລົງມາຈາກສວັນ ເພື່ອທົນທຸກທໍຣະມານຈົນຕາຍທີ່ໄມ້ກາງແຂນ ແທນທຸກຄົນທີ່ໄວ້ວາງໃຈເຊື່ອໃນພຣະອົງ. ສ່ວນເຮົາທັງຫລາຍຖືກເອີ້ນມາໃຫ້ເປັນຄືພຣະອົງນັ້ນໝາຍຄວາມວ່າເຮົາທົນທຸກເໝືອນພຣະອົງ, ດັ່ງນັ້ນຢ່າປລາດໃຈເມື່ອເຮົາມີຄວາມທຸກໃນວັນນີ້ ແລະສຸດທ້າຍເຮົາຈີມີຄວາມສຸກຮ່ວມກັບພຣະອົງທີ່ຟ້າສວັນ.

2. <u>ຄວາມທຸກຂອງພຣະເຢຊູ</u>; ແບກໄມ້ກາງແຂນອັນໜັກໄປໂຄລະໂຄທາພ້ອມທັງຖືກຂ້ຽນຕີ, ແລະຖືກເຍາະເຍີ້ຍພຣະອົງດ້ວຍຄຳເວົ້າອັນຫຍາບຊ້າຕ່າງໆ, ສາວົກທີ່ໃຊ້ຊີວິດນຳກັນສາມປີກໍຫາຍໜ້າ, ປາກແລະທ້ອງກໍຫິວ ບໍ່ໄດ້ກິນແລະດື່ມອັນໃດຫລັງຈາກເຂົາຈັບໃນແລງວັນພຣະຫັດຈົນເຖິງບ່າຍວັນສຸກ.

3. <u>ທີ່ໂຄລະໂຄທາ</u>; ຄົນທີ່ຍ່າງຜ່ານໄປມາ ກໍໝິ່ນປມາດ ເຍາະເຍີ້ຍ (ອ່ານຂໍ້ 29-30). ສ່ວນພວກປະໂຣຫິດທີ່ເຫັນຕົນເອງເປັນຄົນສິລທັມກໍເຍາະເຍີ້ຍ (ອ່ານຂໍ້ 32). ເຮົາຄຣິສຕຽນທີ່ເຂົ້າໃຈວ່າເຮົາເປັນຄົນສິນທັມ ຢ່າໄປເຍາະເຍີ້ຍຜູ້ໃດເມື່ອເພິ່ນຖືກຕົກຕ່ຳ.

<u>**ຊົງສິ້ນພຣະຊົນ**</u> (ມາຣະໂກ 15:33-43)

1. ຂໍ້ 33 ກ່າວເຖິງເວລາຫົກໂມງແລ້ວຈະເຫັນຕົນ (ຄ) ນ້ອຍໆ ເພື່ອໃຫ້ເຮົາເບິ່ງ foot note ຫລືໃຫ້ເບິ່ງຫລັງຈາກຂີດກ້ອງທາງລຸ່ມໜ້າເຈັ້ງໃນພຣະຄັມພີ ເຮົາຈະເຫັນວ່າ (ຄ. ສມັຍນີ້ເຄີຍວ່າເວລາທ່ຽງ). ຫາກເວົ້າແຈ້ງແລ້ວແມ່ນຊົ່ວໂມງທີຫົກຂອງມື້. <u>ໝາຍເຫດ</u>: ໃນສມັຍປູ່ຍ່າຕາຍາຍເຮົາຈະນັບມື້ໃໝ່ຈາກຫົກໂມງເຊົ້າເປັນຕົ້ນໄປ ດັ່ງນັ້ນ ຂໍ້ 33 ເວົ້າວ່າເວລາຫົກໂມງແມ່ນຕອນທ່ຽງ ເລີ້ມຕົ້ນນັບແຕ່ຫົກໂມງເຊົ້າໄປເຖິງທ່ຽງແມ່ນຫົກຊົ່ວໂມງ ຫລືຊົ່ວໂມງທີຫົກ. ແຕ່ໃນສມັຍສາກົນຈະນັບຈາກສິບສອງໂມງກາງຄືນເປັນມື້ໃໝ່. ເພື່ອຄວາມກະຈ່າງແຈ້ງອີກໃຫ້ທ່ານເບິ່ງໂມງຂອງທ່ານຈະປ່ຽນວັນໃໝ່ຫລັງຈາກທ່ຽງຄືນ.

2. ພຣະເຢຊູໄດ້ຮ້ອງໄຫ້ກ່າວວ່າ *“ເອໂລອີ, ເອໂລອີ ແລມາ ຊະບັກທານີ” (ແປວ່າ “ພຣະເຈົ້າຂອງຂ້າພຣະອົງ ພຣະເຈົ້າຂອງຂ້າພຣະອົງ ເພາະເຫດໃດພຣະອົງຈຶ່ງປະຖິ້ມຂ້າພຣະອົງເສັຽ ”)* ຄໍາເວົ້າຄໍານີ້ພຣະເຢຊູໄດ້ກ່າວເຖິງເພງສັຣເສີນ 22:1. ພຣະເຈົ້າບໍ່ໄດ້ປະຖິ້ມພຣະເຢຊູ ແລະຈະບໍ່ຖິ້ມພວກເຮົາ ແຕ່ພຣະເຈົ້າໄດ້ອວ່າຍພຣະພັກ (ຫລຽວໜ້າ) ໜີຈາກຄວາມບາບ ເພາະເວລານັ້ນພຣະເຢຊູກໍາລັງຫອບຄວາມບາບຂອງທຸກຄົນໄວ້ໃນພຣະອົງ. (ຄໍາອະທິບາຍພຣະຄັມພີບາງສະບັບເວົ້າວ່າ ພຣະເຢຊູຕ້ອງຖືກແຍກຈາກພຣະບິດາພຽງບຶດນຶ່ງ ເພາະໃນຕອນນັ້ນພຣະອົງຊົງກໍາລັງແບກບາບຂອງຄົນທັງໂລກ).

3. ພຣະທັມໂຢຮັນບອກວ່າ "*ເມື່ອພຣະເຢຊູຊົງຮັບເຫລົ້າແວງສົ້ມແລ້ວ ພຣະອົງກໍຊົງກ່າວວ່າ ""ສໍາເຣັດແລ້ວ"" ແລະເມື່ອກົ້ມພຣະພັກລົງ ພຣະອົງຊົງມອບຈິດວິນຍານໄວ້*" (ໂຢຮັນ 19: 30) ແປວ່າ ໜ້າທີ່ການຊົງໄຖ່ພຣະອົງໄດ້ສໍາເຣັດລົງຕອນສິ້ນລົມຫາຍໃຈ ແລະມອບຈິດວິນຍານໄວ້ກັບພຣະບິດາ.

<u>**ຊົງຄືນພຣະຊົນ**</u> (ມາຣະໂກ 16:1-8)

1. <u>ເຣື່ອງອຸບໂມງເປັນດັ່ງນີ້</u>; ໂຢເຊບໄທບ້ານອາຣີມາທາຍ ເປັນສະມາຊິກສານສູງສຸດ ນໍາເອົາສົບຂອງພຣະເຢຊູໄປບັນຈຸໄວ້ໃນອຸບໂມງສ່ວນຕົວຂອງລາວ. ຊາຍນີ້ບໍ່ເຄີຍມີຊື່ປາກົດໃນພຣະຄັມພີມາກ່ອນແຖມຍັງເປັນຄົນນອກສິນທັມທີ່ເຮັດການຢູ່ສານສູງສຸດອີກ. ເຣື່ອງນີ້ໄດ້ສະທ້ອນເຖິງຄໍາເວົ້າທີ່ພຣະເຢຊູຊົງກ່າວວ່າ " *ເຮົາບອກທ່ານທັງຫລາຍຕາມຄວາມຈິງວ່າ ພວກເກັບພາສີແລະຍິງແມ່ຈ້າງກໍກໍາລັງເຂົ້າໃນຣາຊແຜ່ນດິນຂອງພຣະເຈົ້າກ່ອນພວກທ່ານ* " ( ມັດທາຍ 21:31).

2. ວັນຊະບາໂຕ ແມ່ນວັນເສົາ ສະນັ້ນມາຣະໂກຈຶ່ງກ່າວວ່າ ວັນຊະບາໂຕ ລ່ວງໄປ ຫລືໃນວັນອາທິດໄດ້ມີນາງມາຣີອາໄທມັກດາລາ, ມາຣີອາແມ່ຂອງຢາໂກໂບ ແລະນາງຊາໂລເມ ໄດ້ຈັດຕຽມເຄື່ອງຫອມເພື່ອໄປທາສົບພຣະສົບຂອງພຣະເຢຊູ ແຕ່ເຊົ້າມືດ ດ້ວຍໃຈຮັກ, ໃຈນັບຖື ແລະໃຈຜູກພັນ.

3. ພວກຜູ້ຍິງໄດ້ຊື່ວ່າເປັນຄົນກຸ່ມທໍາອິດທີ່ອອກໄປບອກຂ່າວດີ ຄືຂ່າວການຄືນພຣະຊົນໃຫ້ພວກສາວົກຟັງ (ອ່ານມັດທາຍ 28:8).

*ຫວ*

## ຄຳແນະນຳສຳລັບຄຣູສອນ
## ບົດຮຽນຄຣິສມັສ
## <u>ພຣະເຈົ້າຊົງຢູ່ກັບເຮົາ</u>

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ມັດທາຍ 1:1, 17-25

**ພູມຫລັງຂອງພຣະຄັມພີ:** ມັດທາຍ 1

**ຈຸດສຳຄັນຂອງບົດຮຽນນີ້:** ການບັງເກີດພຣະເຢຊູໄດ້ສຳເຣັດໂດຍຊື່ວ່າ ເອມານູເອນ

**ຄຳຖາມເພື່ອການຄົ້ນຄວ້າ:** ເຮົາຈະຕ້ອນຮັບການເກີດພຣະເຢຊູທີ່ຊື່ວ່າເອມານູເອນແນວໃດ?

**ຈຸດປະສົງຂອງບົດຮຽນ:** ເພື່ອໃຫ້ເຮົາໄດ້ຮັບເຊື່ອແລະປະຕິບັດ

### <u>ບົດນຳ</u>

ບົດຮຽນວັນນີ້ຈະເນັ້ນໜັກເຣື່ອງເຊື້ອວົງຂອງພຣະເຢຊູເປັນຈຸດສຳຄັນ ແລະວິກິດຂອງຄອບຄົວຂອງໂຢເຊບທີ່ເຫັນວ່າມາຣີອາຄູ່ໝັ້ນຂອງລາວມີທ້ອງກ່ອນແຕ່ງງານນັ້ນກາຍເປັນບັນຫາໃຫຍ່ຂອງລາວ, ເບິ່ງວ່າລາວຈະແກ້ໄຂບັນຫາດ້ວຍຕົນເອງແນວໃດ? ໃນທີ່ສຸດລາວກໍບໍ່ເຮັດຕາມຄວາມຄິດຈິດໃຈຂອງລາວ.

### **ເຊື້ອວົງຂອງພຣະເຢຊູ** (ມັດທາຍ 1:1-17)

1. ພຣະທັມມັດທາຍໄດ້ແນະນຳຄວາມເປັນມາຂອງຄຣິສມັສ ໂດຍເລີ້ມຈາກເຊື້ອສາຍຂອງພຣະເຢຊູຢ່າງຍືດຍາວ, ແຕ່ຖ້າບໍ່ຕັ້ງໃຈເບິ່ງຢ່າງຄັກແນ່ເຮົາຈະເຫັນວ່າເປັນເຣື່ອງທີ່ບໍ່ໜ້າສົນໃຈ. ດັ່ງນັ້ນຈຶ່ງຂໍແນະນຳໃຫ້ຄຣູໄປຊອກຄົ້ນ ດາວໂລດ ເຣື່ອງເຊື້ອວົງຂອງພຣະເຢຊູ ຫລືໄປຊື້ເອົາ Chart ຕາມຮ້ານຄຣິສຕຽນມາໃຫ້ນັກຮຽນເບິ່ງຈະເປັນການດີ, ເພາະຈະໄດ້ຮູ້ວ່າພຣະເຢຊູສືບເຊື້ອສາຍຈາກກະສັດດາວິດຢ່າງໃດ.

2. ເລີ້ມຕົ້ນຈາກອັບຣາຮາມເປັນຕົ້ນຕໍມາຈົນເຖິງພຣະເຢຊູຄຣິດ ນັບໄດ້ວ່າເປັນເວລາ 120 ຊົ່ວຄົນແຕ່ລະຊົ່ວຄົນນັ້ນມີອາຍຸແຕກຕ່າງກັນ ເພາະຄົນສມັຍບູຮານອາຍຸຍືນຍາວກວ່າດຽວນີ້, ດັ່ງນັ້ນການເກັບກຳລາຍລະອຽດຈຶ່ງເປັນການຍາກ. (ອ່ານມັດທາຍ 1:17).

3. ພວກຜູ້ທຳນວາຍຈຶ່ງທຳນວາຍວ່າ ພຣະເມຊີອາ ຄືພຣະຜູ້ຊ່ອຍໃຫ້ພົ້ນຈະເກີດມາຈາກເຊື້ອສາຍຂອງກະສັດດາວິດ. (ອ່ານພຣະທັມເອຊາຢາ 7:13-14).

**<u>ວິກິດ(ບັນຫາ)ໃນຄອບຄົວ</u>** (ມັດທາຍ 1: 18-19)

1. ເຣື່ອງເຊື້ອວົງຂອງພຣະເຢຊູ ເລີ້ມແຕ່ອັບຣາຮາມຈົນເຖິງໂຢເຊບແລະໃນທີ່ສຸດກໍຈົບລົງໃນພຣະເຢຊູ ເພາະບໍ່ມີການເລົ່າອີກຕໍ່ໄປ ເພາະວ່າເປົ້າໝາຍໃນ 120 ຊົ່ວອາຍຸຄົນນັ້ນແມ່ນແນ່ໃສພຣະເຢຊູລົງມາເກີດເພື່ອຊ່ອຍໄພ່ພົນຂອງພຣະອົງໃຫ້ພົ້ນ ແລະໃນວັນເກີດຂອງພຣະອົງຈຶ່ງເປັນທີ່ມາຂອງວັນຄຣິສມັສ.

2. ພຣະທັມມັດທາຍບອກຢ່າງແຈ້ງເຖິງການເກີດຂອງພຣະເຢຊູວ່າ ມາຣີອາ ໄດ້ມີທ້ອງຖືພາດ້ວຍຣິດເດດຂອງພຣະວິນຍານບໍຣິສຸດ ອັນສະແດງເຖິງ ມາຣີອາເປັນຍິງສາວບໍຣິສຸດທີ່ບໍ່ເຄີຍສົມສູ່ກັບຊາຍໃດ (ຂໍ້ 18-19).

3. ມັດທາຍບອກວ່າ ໂຢເຊບເປັນຄົນສິນທັມ ແປວ່າ ເປັນຄົນປະຕິບັດຕາມຫລັກສິນທັມ, ຄວາມມີສິນທັມຂອງລາວນັ້ນ ເຮັດໃຫ້ລາວນັບຖືມາຣີອາໂດຍການບໍ່ລ່ວງເກີນ, ເມື່ອຮູ້ວ່ານາງມາຣີອາມີທ້ອງຈຶ່ງມີຄວາມທຸກໃຈ ເພາະຄຶດວ່າມາຣີອານອກໃຈ, ດ້ວຍຄວາມມີສິນທັມລາວຈຶ່ງຄິດຖອນໝັ້ນໂດຍບໍ່ໃຫ້ມາຣີອາເສັຽໜ້າ, ແລະບໍ່ຢາກໃຫ້ນາງຕາຍດ້ວຍການຖືກຄວ່າງດ້ວຍຫີນຈາກປະຊາຊົນ ເພາະນັ້ນເປັນກົດໝາຍຂອງຊາວຍິວ. ເຣື່ອງນີ້ເຮັດໃຫ້ໂຢເຊັບຄິດຢ່າງໜັກ ຈົນເອີ້ນໄດ້ວ່າຄາວວິກິດການຂອງຄອບຄົວ.

**<u>ຄອບຄົວຂອງພຣະເຈົ້າ</u>** (ມັດທາຍ 20-25)

1. ໂຢເຊບອາສັຍຄວາມຮູ້, ຄວາມສາມາດ, ຄວາມຄິດຕຶກຕອງ ແລະອາສັຍເງື່ອນໄຂຂອງວັດທະນະທັມສັງຄົມຂອງຊາດຍິວ ມາເປັນເຄື່ອງວັດແທກໃນການຕັດສິນໃຈຂອງລາວ ທີ່ເຮົາເຫັນວ່າບໍ່ຖືກຕ້ອງ, ດ້ວຍເຫດນີ້ເຮົາກໍບໍ່ຄວນເອົາສິ່ງເຫລົ່ານີ້ມາໃຊ້ໃນຊີວິດເຮົາ ເພາະຄວາມຮູ້ຄວາມສາມາດຂອງເຮົາຈະທຽບກັບພຣະເຈົ້າບໍ່ໄດ້ (ອ່ານ 1ໂກຣິນໂທ 1: 25ກ).

2. ພຣະເຈົ້າໄດ້ສົ່ງເທວະດາມາບອກຄວາມຈິງແກ່ລາວທາງຄວາມຝັນວ່າ "*ໂຢເຊບບຸດດາວິດເອີຍ*", ເທວະດາໄດ້ເອີ້ນອອກຊື່ ໂຢເຊບ ຢ່າງຖືກຕ້ອງ ແຕ່ເວົ້າວ່າ "*ໂຢເຊບບຸດດາວິດ* " ຊຶ່ງພໍ່ຂອງໂຢເຊບບໍ່ໄດ້ຊື່ດາວິດ ແຕ່ຊື່ ຢາໂຄບ (ຂໍ້ 16). ສົນທະນະກັບນັກຮຽນ, ໃຫ້ນັກຮຽນອອກຄໍາເຫັນ ເປັນຫຍັງເທວະຈຶ່ງເອີ້ນວ່າແນວນັ້ນ? ແລ້ວບອກນັກຮຽນວ່າ ການທີ່ເທວະດາກ່າວເຊັ່ນນັ້ນກໍເພາະວ່າໂຢເຊບກໍແມ່ນເຊື້ອສາຍຂອງດາວິດ ແລະການກ່າວເຊັ່ນນັ້ນກໍເພາະໃຫ້ຖືກຕາມຄໍາທໍານວາຍທີ່ກ່າວໄວ້ແລ້ວໃນ (ອຊຢ 7:13-14).

3. ອ່ານມັດທາຍ 24-25 *ເມື່ອໂຢເຊບຕື່ນຂຶ້ນກໍເຮັດຕາມຄໍາທີ່ເທວະດາຂອງພຣະຜູ້ເປັນເຈົ້າສັ່ງນັ້ນ ຄືຮັບເອົານາງມາຣີອາມາເປັນພັຣຍາຂອງຕົນ ແຕ່ບໍ່ໄດ້ສົມສູ່ຢູ່ກັບນາງຈົນປະສູດບຸດຊາຍແລ້ວ ແລະໂຢເຊບໄດ້ເອີ້ນຊື່ບຸດນັ້ນວ່າ ເຢຊູ* "

*ທວ*